# ສະຖິຕິການນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ຂອງ ສປປ ລາວ



ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ

ປະຈຳປີ 2021

## ກະກຽມ ແລະ ຮຽບຮຽງໂດຍ

<u>ຄະນະຊີ້ນຳລວມ</u>

| | |
|---|---|
| ທ່ານ ນາງ ມະນີວອນ ວົງໄຊ | ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ມີວວິໄຊ ປາລີ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ພຸດສະຫວັນ ຊຸນຈັນທະ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ວ່າງໃຈ ວ່າງ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |

<u>ຄະນະກວດແກ້ເນື້ອໃນ ແລະ ຮຽບຮຽງ</u>

| | |
|---|---|
| ທ່ານ ໄຊຍະສອນ ສີລິພົງ | ຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ໂພໄຊ ອິນທະປັວລີ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ວຽງຄຳ ທິບຸນມາ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

<u>ຄະນະອອກແບບ ແລະ ຈັດລຽງ</u>

| | |
|---|---|
| ທ່ານ ນາງ ລອນຄຳ ຄຳດາລາວົງ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ອານຸຊາ ແສນສົມບັດ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

<u>ຜູ້ເກັບກຳລາຍລະອຽດ ແລະ ວິເຄາະຂໍ້ມູນ</u>

| | |
|---|---|
| ທ່ານ ນາງ ສຸພາພອນ ທິບພະວົງ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

# ຄໍາເຫັນຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ

ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ສ້າງປຶ້ມສະຖິຕິການນໍາເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າປະຈໍາປີ 2021 ໂດຍຂໍ້ມູນເບື້ອງສົ່ງອອກແມ່ນໄດ້ສັງລວມເອົາຕາມສະຖິຕິການນໍາໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າຈາກ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ, ສ່ວນຂໍ້ມູນເບື້ອງຂາເຂົ້າແມ່ນ ເອົາຈາກກົມພາສີ, ກະຊວງການເງິນ. ການສັງລວມສະຖິຕິໃນປີນີ້ໄດ້ສະແດງໃຫ້ເຫັນວ່າ ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າກວມເອົາ 36.68% ຂອງມູນຄ່າການສົ່ງອອກທັງໝົດ, ແຕ່ຖ້າບໍ່ນັບເອົາມູນຄ່າການສົ່ງອອກກະແສໄຟຟ້າແມ່ນ ກວມເອົາ 38.13% ຂອງມູນຄ່າການສົ່ງອອກທັງໝົດ. ສ່ວນການນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າແມ່ນ ກວມເອົາ 12.92% ຂອງການນໍາເຂົ້າທັງໝົດ. ຈາກຂໍ້ມູນດັ່ງກ່າວເຫັນໄດ້ວ່າ ສິດທິພິເສດທາງການຄ້າໄດ້ເປີດໂອກາດໃຫ້ແກ່ຜູ້ປະກອບການຢູ່ ສປປ ລາວ ສາມາດເຂົ້າເຖິງຕະຫຼາດຂອງບັນດາປະເທດທີ່ ສປປ ລາວ ເປັນພາຄີໄດ້ຢ່າງເປັນລະບົບ.

ປຶ້ມສະຖິຕິຫົວນີ້ໄດ້ສ້າງຂຶ້ນມາດ້ວຍຄວາມເອົາໃຈໃສ່, ດ້ວຍຄວາມມຸ່ງຫວັງເພື່ອໃຫ້ຜູ້ນໍາໃຊ້ເຂົ້າເຖິງຂໍ້ມູນການນໍາໃຊ້ສິດທິພິເສດພາຍໃຕ້ຂອບສັນຍາການຄ້າສະບັບຕ່າງໆ ແລະ ສາມາດນໍາໃຊ້ໄດ້ຮັບຜົນປະໂຫຍດສູງສຸດ. ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຮ່ວມມືໃນການສະໜອງຂໍ້ມູນສະຖິຕິໃນຄັ້ງນີ້ ໂດຍສະເພາະແມ່ນ ສະຖິຕິການນໍາໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດຂາອອກຈາກ 39 ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ກໍ່ຍັງໄດ້ຮັບການສະໜອງສະຖິຕິການນໍາເຂົ້າ ແລະ ສົ່ງອອກແບບທົ່ວໄປທັງໝົດ ແລະ ການນໍາເຂົ້າທີ່ໃຊ້ສິດທິພິເສດທາງການຄ້າຈາກ ກົມພາສີ, ກະຊວງການເງິນ ແລະ ຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່.

ກົມການນໍາເຂົ້າ ແລະ ສົ່ງອອກ ຫວັງເປັນຢ່າງຍິ່ງວ່າປຶ້ມຫົວນີ້ຈະນໍາປະໂຫຍດອັນສູງສຸດມາສູ່ບັນດາທ່ານ. ພ້ອມກັນນັ້ນ, ຖ້າມີຂໍ້ຂາດຕົກບົກພ່ອງປະການໃດ ພວກເຮົາຂໍອະໄພມາຍັງນະທີ່ນີ້ດ້ວຍ ແລະ ມີຄວາມຍິນດີຮັບເອົາຄໍາຕໍານິຕິຊົມຈາກບັນດາທ່ານ ເພື່ອນໍາໄປປັບປຸງໃນການສ້າງປຶ້ມສະຖິຕິສະບັບຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ ..15.. ສິງຫາ 2022

**ຫົວໜ້າກົມ**

ນ. ມະນີວອນ ວົງໄຊ

## ບັນຊີລາຍຊື່ຂອງຄໍາອັກສອນຫຍໍ້

| | |
|---|---|
| REX: | ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ (Registered Exporter System) |
| AWSC: | ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN Wide Self - Certification) |
| Form A: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (Generalized System of Preferences: GSP) |
| Form D: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN Trade in Goods Agreement: ATIGA) |
| Form E: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ສປ ຈີນ (ASEAN - China Free Trade Area: ACFTA) |
| Form S: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກໍາເນີດສິນຄ້ານໍາໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນໍາເຂົ້າ - ສົ່ງອອກ ສປປ ລາວ - ສສ ຫວຽດນາມ |
| Form SPT: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (Special Preferential Tariff Treatment: SPT) |
| Form AI: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ອິນເດຍ (ASEAN - India Free Trade Area: AIFTA) |
| Form AK: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ສ ເກົາຫຼີ (ASEAN - Korea Free Trade Area: AKFTA) |
| Form AJ: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຍີ່ປຸ່ນ (The Agreement on Comphrehensive Economic Partnership among Member State of the Association of Southeast Asian Nation and Japan: AJCEP) |
| Form AANZ: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (Agreement Establishing the ASEAN - Australia - New Zealand Free Trade Area: AANZFTA) |
| Form DFTP: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (Duty Free Tariff Preference: DFTP) |
| Form APTA: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາການຄ້າອາຊີ - ປາຊີຟິກ (Asia - Pacific Trade Agreement: APTA) |
| Form AHK: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີ ອາຊຽນ - ຮົງກົງ, ສປ ຈີນ (ASEAN – Hong Kong Free Trade Area: AHKFTA) |
| CO-Korea: | ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Certificate of Origin for Preferential Tariff for Least Developed Countries: CO-Korea) |
| CO-China: | ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ (GSP 97% ຫຼື Form CO-China) |
| GSP: | ສິດທິພິເສດທາງການຄ້າແບບຝ່າຍດຽວ (Generalized System of Preferences) |
| FTA: | ສັນຍາການຄ້າເສລີ (Free Trade Agreement) |

# ສາລະບານ

ໜ້າ


1. ພາບລວມການນຳເຂົ້າ ແລະ ສົ່ງອອກສິນຄ້າ ແຕ່ປີ 2020 ຫາ 2021......1

2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ......2

2.1 ປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ......2

2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ......4

2.3 ປະເພດແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ (Certificate of Origin: CO)......4

2.3.1 ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ (Registered Exporter System: REX)......6

2.3.2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN wide self - certification: AWSC)......8

2.3.3 ສິດທິພິເສດທາງການຄ້າແບບທົ່ວໄປ (GSP ຫຼື Form A)......10

2.3.4 ສັນຍາການຄ້າດ້ານສິນຄ້າອາຊຽນ (Form D)......12

2.3.5 ສັນຍາພາຍໃຕ້ເຂດການຄ້າເສລີອາຊຽນ - ສປ ຈີນ (Form E)......14

2.3.6 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S)......16

2.3.7 ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)......17

2.3.8 ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)......19

2.3.9 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຍີ່ປຸ່ນ (Form AJ)......21

2.3.10 ສັນຍາການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (Form AANZ)......23

2.3.11 ສັນຍາການຄ້າອາຊີ-ປາຊີຟິກ (Form APTA)......25

2.3.12 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Form CO-Korea)......25

2.3.13 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (Duty Free Tariff Preference: Form DFTP)......27

2.3.14 ສັນຍາການຄ້າເສລີອາຊຽນ - ຮົງກົງ, ສປ ຈີນ (Form AHK)......27

2.3.15 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ (GSP97% ຫຼື Form CO - China) ......28

3. ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ......28

3.1 ປະເທດນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ......28

3.2 ລາຍການສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ......30

## 1. ພາບລວມການນຳເຂົ້າ ແລະ ສົ່ງອອກສິນຄ້າ ແຕ່ປີ 2020 ຫາ 2021

ການນຳເຂົ້າ ແລະ ສົ່ງອອກ ສິນຄ້າຂອງ ສປປ ລາວ ປະກອບດ້ວຍ 02 ຮູບແບບຄື: ການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ແລະ ການນຳເຂົ້າ ແລະ ສົ່ງອອກແບບທີ່ໄດ້ຮັບສິດທິພິເສດທາງການຄ້າ (ການຫຼຸດຜ່ອນ ຫຼື ຍົກເວັ້ນອັດຕາພາສີ). ໃນນັ້ນ, ການນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ແບ່ງອອກເປັນ 02 ຮູບແບບດ້ວຍກັນຄື: ແບບຝ່າຍດຽວ[1] ແລະ ແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ[2]. ສຳລັບການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ຂອງ ສປປ ລາວ ປະຈຳປີ 2021 ແມ່ນອີງຕາມຂໍ້ມູນທີ່ໄດ້ຮັບຈາກ ກົມພາສີ, ກະຊວງການເງິນ ແລະ ຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່ ໃນປີນີ້ ເຫັນວ່າການສົ່ງອອກແບບທົ່ວໄປທັງໝົດ ສາມາດບັນລຸ 7,626,919,544.09 ໂດລາສະຫະລັດ ເມື່ອທຽບໃສ່ການນຳເຂົ້າແບບທົ່ວໄປທັງໝົດ 5,887,331,437.05 ໂດລາສະຫະລັດ ເຫັນວ່າ ມູນຄ່າການສົ່ງອອກ ຂອງ ສປປ ລາວ ໃນປີ 2021 ນີ້ສູງກວ່າມູນຄ່າການນຳເຂົ້າເຖິງ 1,739,588,107.04 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກແບບທົ່ວໄປທັງໝົດໃນປີ 2021 ກັບປີ 2020 ເຫັນວ່າເພີ່ມຂຶ້ນ 23.65%, ສ່ວນມູນຄ່າການນຳເຂົ້າແບບທົ່ວໄປທັງໝົດແມ່ນເພີ່ມຂຶ້ນພຽງ 16.25%.

ສຳລັບການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນໄລຍະປີ 2020 ຫາ 2021 ແມ່ນມີມູນຄ່າສູງພໍສົມຄວນ ຄື: 1,358,874,382.44 ໂດລາສະຫະລັດ ແລະ 2,798,241,747.40 ໂດລາສະຫະລັດ ຕາມລຳດັບ. ຊຶ່ງການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄດ້ກວມເອົາອັດຕາສ່ວນຂອງການສົ່ງອອກທັງໝົດຫຼາຍພໍສົມຄວນຄື: 22.03% ແລະ 36.68% ຕາມລຳດັບ, ເມື່ອສົມທຽບມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າປີ 2021 ກັບ 2020 ເຫັນວ່າ ມີເປີເຊັນເພີ່ມຂຶ້ນສູງເຖິງ 105.92%. ສ່ວນເບື້ອງການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າໃນປີ 2020 ຫາ 2021 ແມ່ນມີມູນຄ່າ 605,446,803.42 ໂດລາສະຫະລັດ ແລະ 761,180,504.69 ໂດລາສະຫະລັດ ຕາມລຳດັບ ເຫັນວ່າ ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າກວມເອົາພຽງແຕ່ 12.92% ແລະ 11.95% ຂອງມູນຄ່າການນຳເຂົ້າທັງໝົດ, ເມື່ອສົມທຽບມູນຄ່າການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າປີ 2021 ກັບ 2020 ເຫັນວ່າ ມີເປີເຊັນເພີ່ມຂຶ້ນພຽງ 25.72%.

ສັງເກດເຫັນວ່າ ມູນຄ່າການນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດຂອງ ສປປ ລາວ ໃນປີ 2021 ນີ້ ແມ່ນເພີ່ມຂຶ້ນສູງພໍສົມຄວນ ຖ້າທຽບໃສ່ປີ 2020 ທີ່ຜ່ານມາ ເພີ່ມຂຶ້ນ 81.20%. ສາເຫດອາດເນື່ອງມາຈາກໃນປີ 2020 ທີ່ຜ່ານມາເປັນຊ່ວງໄລຍະເວລາທີ່ມີການເລີ່ມຕົ້ນແຜ່ລະບາດຂອງພະຍາດໂຄວິດ 19 ໂດຍຫຼາຍປະເທດຜູ້ນຳເຂົ້າ ແລະ ສົ່ງອອກ ໄດ້ເພີ່ມມາດຕະການລະມັດລະວັງ ແລະ ສະກັດກັ້ນ, ຊຶ່ງເຮັດໃຫ້ທຸກພາກສ່ວນຕ້ອງໄດ້ປັບປຸງຕົວເອງໃຫ້ສາມາດຢູ່ລອດໃນສະຖານະການດັ່ງກ່າວ ແລະ ຮັບມືກັບການປ່ຽນແປງໃນແຕ່ລະໄລຍະ. ພໍມາເຖິງປີ 2021 ເຖິງແມ່ນວ່າການແຜ່ລະບາດຂອງພະຍາດໂຄວິດ 19 ຈະຍັງສືບຕໍ່ ແຕ່ວ່າລັດຖະບານມີຄວາມພ້ອມສາມາດຮັບມືກັບພະຍາດດັ່ງກ່າວ ເຮັດໃຫ້ບັນຫາຕ່າງໆແມ່ນຖືກແກ້ໄຂໄດ້ຢ່າງວ່ອງໄວ ແລະ ທັນເຫດການ ຈຶ່ງເຮັດໃຫ້ການຜະລິດສິນຄ້າເພື່ອສົ່ງອອກ ແລະ ການນຳເຂົ້າສິນຄ້າປະເພດຕ່າງໆມີຄວາມສະດວກຫຼາຍຂຶ້ນ.

[1] ສິດທິພິເສດແບບຝ່າຍດຽວ (ລະບົບສິດທິພິເສດທົ່ວໄປ ຫຼື Generalized System of Preferences: GSP)

[2] ສິດທິພິເສດແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ (ເຂດການຄ້າເສລີ ຫຼື Free Trade Area: FTA)

**ຕາຕະລາງ 01:** ການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ແລະ ພາຍໃຕ້ສິດທິພິເສດທາງການຄ້າ ປີ 2020 ຫາ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍການ | 2020 | 2021 | ສົມທຽບ% |
|---|---|---|---|---|
| I | ການສົ່ງອອກ | | | |
| 1 | ການສົ່ງອອກແບບທົ່ວໄປ (ທັງໝົດ) | 6,168,269,464.69 | 7,626,919,544.09 | 23.65 |
| 2 | ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 1,358,874,382.44 | 2,798,241,747.40 | 105.92 |
| 3 | ອັດຕາສ່ວນ | 22.03% | 36.68% | 66.54 |
| II | ການນຳເຂົ້າ | | | |
| 1 | ການນຳເຂົ້າແບບທົ່ວໄປ (ທັງໝົດ) | 5,064,425,360.11 | 5,887,331,437.05 | 16.25 |
| 2 | ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ | 605,446,803.42 | 761,180,504.69 | 25.72 |
| 3 | ອັດຕາສ່ວນ | 11.95% | 12.92% | 8.15 |

**ແຫຼ່ງຂໍ້ມູນ:** ກົມພາສີ ກະຊວງການເງິນ, ຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

## 2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

### 2.1 ປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2021 ສປປ ລາວ ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າທັງໝົດຈຳນວນ 35 ປະເທດ ແລະ ເຂດປົກຄອງພິເສດ ຮົງກົງ, ສປ ຈີນ. ໃນນັ້ນ, ປະເທດທີ່ ສປປ ລາວ ສົ່ງອອກໄປຫຼາຍກວ່າໝູ່ແມ່ນ ສປ ຈີນ, ສສ ຫວຽດນາມ ແລະ ໄທ ມີມູນຄ່າການສົ່ງອອກສູງເຖິງ 1,497,109,102.59 ໂດລາສະຫະລັດ, 498,730,892.51 ໂດລາສະຫະລັດ ແລະ 477,591,139.14 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ ສປປ ລາວ ມີການສົ່ງອອກໜ້ອຍກວ່າໝູ່ໃນປີນີ້ໄດ້ແກ່: ພະມ້າ, ສະວິດເຊີແລນ ແລະ ການາດາ ມີມູນຄ່າການສົ່ງອອກ 19,500.00 ໂດລາສະຫະລັດ, 23,014.50 ໂດລາສະຫະລັດ ແລະ 34,230.40 ໂດລາສະຫະລັດ ຕາມລຳດັບ. ເມື່ອສົມທຽບມູນຄ່າການສົ່ງອອກຂອງປີ 2021 ກັບປີທີ່ຜ່ານມາເຫັນວ່າ ປະເທດທີ່ ສປປ ລາວ ມີເປີເຊັນການສົ່ງອອກສູງກວ່າໝູ່ໄດ້ແກ່: ນິວຊີແລນ, ນໍເວ, ສປ ຈີນ ແລະ ຮົງກົງ, ສປ ຈີນ; ມີເປີເຊັນເພີ່ມຂຶ້ນແມ່ນ 1,251%, 894.58%, 502.06% ແລະ 339.71% ຕາມລຳດັບ. ສ່ວນປະເທດທີ່ ສປປ ລາວ ສົ່ງອອກມີເປີເຊັນການສົ່ງອອກຫຼຸດລົງຫຼາຍກວ່າໝູ່ແມ່ນ ພະມ້າ, ໂປໂລຍ ແລະ ເກຼັກ; ຊຶ່ງມີເປີເຊັນການຫຼຸດລົງແມ່ນ -85.49%, -84.88% ແລະ -64.84% ຕາມລຳດັບ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 02)

**ຕາຕະລາງ 02:** ປະເທດທີ່ ສປປ ລາວ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າໃນປີ 2020 ແລະ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍຊື່ປະເທດ | ມູນຄ່າການສົ່ງອອກ (2020) | ມູນຄ່າການສົ່ງອອກ (2021) | ສົມທຽບ% |
|---|---|---|---|---|
| 1 | ຈີນ | 248,666,479.61 | 1,497,109,102.59 | 502.06 |
| 2 | ຫວຽດນາມ | 310,187,564.14 | 498,730,892.51 | 60.78 |
| 3 | ໄທ | 396,397,753.55 | 477,591,139.14 | 20.48 |
| 4 | ເຢຍລະມັນ | 74,620,787.92 | 73,432,778.33 | -1.59 |
| 5 | ຍີ່ປຸ່ນ | 103,912,219.02 | 45,498,543.93 | -56.21 |
| 6 | ສະວີເດນ | 29,729,120.31 | 26,826,271.51 | -9.76 |
| 7 | ອັງກິດ | 24,686,284.39 | 25,450,128.72 | 3.09 |

| ລ/ດ | ລາຍຊື່ປະເທດ | ມູນຄ່າການສົ່ງອອກ (2020) | ມູນຄ່າການສົ່ງອອກ (2021) | ສົມທຽບ% |
|---|---|---|---|---|
| 8 | ໂຮນລັງ | 19,361,031.87 | 25,111,089.56 | 29.7 |
| 9 | ດານມາກ | 16,611,708.21 | 21,694,275.00 | 30.6 |
| 10 | ປ໋ອກຕຸຍການ | 12,982,648.42 | 21,122,884.25 | 62.7 |
| 11 | ກຳປູເຈຍ | 5,823,266.34 | 17,885,271.96 | 207.13 |
| 12 | ອົດສະຕາລີ | 14,034,989.21 | 16,500,355.80 | 17.57 |
| 13 | ອີຕາລີ | 13,771,938.43 | 11,394,732.74 | -17.26 |
| 14 | ຟີລິບປິນ | 4,769,843.66 | 7,439,118.11 | 55.96 |
| 15 | ອິນໂດເນເຊຍ | 7,524,998.90 | 6,266,259.04 | -16.73 |
| 16 | ສ ເກົາຫຼີ | 4,031,529.92 | 5,878,483.92 | 45.81 |
| 17 | ຕວັກກີ | 2,411,262.50 | 4,293,990.89 | 78.08 |
| 18 | ຝຣັ່ງ | 5,910,981.32 | 3,739,726.15 | -36.73 |
| 19 | ອິນເດຍ | 4,079,485.25 | 2,645,627.67 | -35.15 |
| 20 | ແບນຊິກ | 24,641,603.19 | 1,970,437.55 | -92 |
| 21 | ໂປໂລຍ | 11,652,061.08 | 1,761,748.31 | -84.88 |
| 22 | ມາເລເຊຍ | 933,895.80 | 1,593,996.84 | 70.68 |
| 23 | ແອັສປາຍ | 1,358,583.95 | 1,380,481.65 | 1.61 |
| 24 | ສິງກະໂປ | 694,493.50 | 878,593.12 | 26.51 |
| 25 | ສ ອາເມລິກາ | 1,225,949.00 | 441,504.96 | -63.99 |
| 26 | ນໍເວ | 42,364.95 | 421,351.54 | 894.58 |
| 27 | ອຽກລັງ | 243,116.14 | 353,995.11 | 45.61 |
| 28 | ນິວຊີແລນ | 19,395.89 | 262,084.62 | 1251.24 |
| 29 | ໂອຕຣິສ | 75,743.34 | 191,430.80 | 152.74 |
| 30 | ເຊັກ | 217,398.07 | 121,673.94 | -44.03 |
| 31 | ຮົງກົງ, ສປ ຈີນ | 22,784.53 | 100,186.00 | 339.71 |
| 32 | ເກຼັກ | 218,562.40 | 76,846.24 | -64.84 |
| 33 | ການາດາ | 543,443.08 | 34,230.40 | -93.7 |
| 34 | ສະວິດເຊີແລນ | 53,840.51 | 23,014.50 | -57.25 |
| 35 | ພະມ້າ | 134,368.54 | 19,500.00 | -85.49 |
| 36 | ບຸນກາລີ | 16,390,820.00 | - | -100 |
| 37 | ຟິນແລນ | 319,172.02 | - | -100 |
| 38 | ກຣິອຊີ | 300,314.40 | - | -100 |
| 39 | ລັດເຊຍ | 133,530.00 | - | -100 |
| 40 | ໂຣມາເນຍ | 96,120.00 | - | -100 |
| 41 | ສະໂລວາເກຍ | 42,700.80 | - | -100 |
| 42 | ລັດເວຍ | 228.28 | - | -100 |
| | **ລວມ:** | **1,358,874,382.44** | **2,798,241,747.40** | **105.92** |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

## 2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2020 ການສົ່ງອອກສິນຄ້າຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າ ໄດ້ຈັດລາຍການສິນຄ້າສົ່ງອອກເປັນກຸ່ມສິນຄ້າທັງໝົດມີຈຳນວນ 11 ກຸ່ມ ຄື: ກຸ່ມກະສິກຳ, ກຸ່ມສັດລ້ຽງ, ກຸ່ມຜະລິດຕະພັນແຮ່ທາດ, ກຸ່ມຫັດຖະກຳ, ກຸ່ມອຸດສາຫະກຳ, ກຸ່ມເຄື່ອງປ່າຂອງດົງ, ກຸ່ມເພັດ, ກຸ່ມແກ້ວປະເສີດອື່ນໆ, ກຸ່ມແຮ່ທາດ, ກຸ່ມໄຟຟ້າສົ່ງອອກ ແລະ ກຸ່ມໄມ້ ແລະ ຜະລິດຕະພັນໄມ້. ໃນນັ້ນ, ມີລາຍການສິນຄ້າສົ່ງອອກທັງໝົດຈຳນວນ 249 ລາຍການ ລວມມູນຄ່າການສົ່ງອອກທັງໝົດ ແມ່ນ 2,798,241,747.40 ໂດລາສະຫະລັດ. ສັງເກດເຫັນວ່າ ກຸ່ມສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ 03 ອັນດັບທຳອິດແມ່ນ ກຸ່ມອຸດສາຫະກຳ ທີ່ມີມູນຄ່າການສົ່ງອອກສູງສຸດເຖິງ 1,622,014,726.78 ໂດລາສະຫະລັດ, ຮອງລົງມາແມ່ນ ກຸ່ມກະສິກຳ ມີມູນຄ່າ 951,884,726.32 ໂດລາສະຫະລັດ ແລະ ກຸ່ມແຮ່ທາດ ມີມູນຄ່າ 86,714,609.82 ໂດລາສະຫະລັດ.

ສຳລັບລາຍການສິນຄ້າສົ່ງອອກໃນປີ 2020 ທັງໝົດມີຈຳນວນ 262 ລາຍການ ລວມມູນຄ່າການສົ່ງອອກທັງໝົດ ແມ່ນ 1,358,874,382.44 ໂດລາສະຫະລັດ. ສັງເກດເຫັນວ່າ ກຸ່ມສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ 03 ອັນດັບທຳອິດແມ່ນ ກຸ່ມອຸດສາຫະກຳ ທີ່ມີມູນຄ່າການສົ່ງອອກສູງສຸດເຖິງ 726,735,991.43 ໂດລາສະຫະລັດ, ຮອງລົງມາແມ່ນ ກຸ່ມກະສິກຳ ມີມູນຄ່າ 497,750,373.98 ໂດລາສະຫະລັດ ແລະ ກຸ່ມໄຟຟ້າສົ່ງອອກ ມີມູນຄ່າ 65,277,734.13 ໂດລາສະຫະລັດ.

ເມື່ອສົມທຽບກຸ່ມສິນຄ້າສົ່ງອອກປະຈຳປີ 2021 ກັບ ປີ 2020 ເຫັນວ່າ ເກືອບໝົດທຸກກຸ່ມສິນຄ້າທີ່ມີອັດຕາການສົ່ງອອກເພີ່ມຂຶ້ນໄດ້ແກ່: ສັດລ້ຽງ, ແຮ່ທາດ, ອຸດສາຫະກຳ, ຫັດຖະກຳ, ເຄື່ອງປ່າຂອງດົງ, ໄມ້ ແລະ ຜະລິດຕະພັນໄມ້, ກະສິກຳ, ແກ້ວປະເສີດ ແລະ ຜະລິດຕະພັນແຮ່ທາດ; ເປີເຊັນເພີ່ມຂຶ້ນແມ່ນ 310.03%, 225.98%, 123.19%, 121.39%, 98.48%, 91.56%, 91.24%, 81.48% ແລະ 51.25% ຕາມລຳດັບ. ສ່ວນກຸ່ມສິນຄ້າທີ່ແນວໂນ້ມຫຼຸດລົງຈາກປີທີ່ຜ່ານມາແມ່ນ ກຸ່ມໄຟຟ້າສົ່ງອອກ ມີເປີເຊັນຫຼຸດລົງແມ່ນ -0.48% ແລະ ກຸ່ມສິນຄ້າທີ່ບໍ່ມີການສົ່ງອອກໃນປີນີ້ແມ່ນ ກຸ່ມເພັດ.

## 2.3 ປະເພດແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ (Certificate of Origin: CO)

ໃນປີ 2021 ສປປ ລາວ ໄດ້ສົ່ງອອກສິນຄ້າປະເພດຕ່າງໆ ໂດຍນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ ມີທັງໝົດຈຳນວນ 13 ແບບພິມ (Forms) ແລະ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (Self-Certification). ໃນນັ້ນ, ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ປະກອບມີ 02 ຮູບແບບຄື: ຂໍ້ຕົກລົງວ່າດ້ວຍການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN Wide Self - Certification: AWSC) ແລະ ຂໍ້ຕົກລົງວ່າດ້ວຍການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ (Registered Exporter System: REX). ຊຶ່ງວ່າໃນຈຳນວນ 13 Forms ແລະ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໃນປີນີ້ທີ່ໄດ້ມີຢັ້ງຢືນອອກໄປທັງໝົດຈຳນວນ 27,957 ຊຸດ, ໂດຍສົ່ງອອກໄປທັງໝົດຈຳນວນ 35 ປະເທດ ແລະ ເຂດປົກຄອງພິເສດ ຮົງກົງ, ສປ ຈີນ ທີ່ມີມູນຄ່າການສົ່ງອອກທັງໝົດ 2,798,241,747.40 ໂດລາສະຫະລັດ ເມື່ອສົມທຽບໃສ່ມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ 2020 ທີ່ມີມູນຄ່າການສົ່ງອອກ 1,358,874,382.44 ໂດລາສະຫະລັດ ເຫັນວ່າມີເປີເຊັນການສົ່ງອອກເພີ່ມຂຶ້ນສູງເຖິງ 105.92%.

ໃນໄລຍະ 01 ປີ ທີ່ຜ່ານມາເຫັນວ່າ Form ທີ່ມີມູນຄ່າການສົ່ງອອກຫຼາຍກວ່າໝູ່ 03 ອັນດັບທຳອິດແມ່ນ E, D, ແລະ CO-China, ຊຶ່ງມີມູນຄ່າການສົ່ງອອກສູງເຖິງ 1,074,818,994.20 ໂດລາສະຫະລັດ, 825,768,651.25 ໂດລາສະຫະລັດ ແລະ 467,685,421.68 ໂດລາສະຫະລັດ ຕາມລຳດັບ. ນອກຈາກ

ນັ້ນ, ສັງເກດເຫັນວ່າ Form ທີ່ມີແນວໂນ້ມເພີ່ມຂຶ້ນຫຼາຍໃນປີນີ້ໄດ້ແກ່: Form APTA, E, AHK, AK, ASEAN Self Certification, D, AI ແລະ AANZ; ເປີເຊັນເພີ່ມຂຶ້ນຄື: 525%, 354.47%, 339.71%, 105.05%, 57.30%, 52.52%, 41.39% ແລະ 14.80% ຕາມລໍາດັບ. ພ້ອມດຽວກັນກໍ່ຍັງມີບາງ Form ມີການນໍາໃຊ້ຫຼຸດລົງເປັນຕົ້ນແມ່ນ: Form S, DFTP, A (ສໍາລັບຜະລິດຕະພັນທົ່ວໄປ), CO-Korea, ລະບົບ REX ແລະ AJ; ມີເປີເຊັນຫຼຸດລົງ ຄື: -85.75%, -75.58%, -35.10%, -33.53%, -24.20% ແລະ -5.67% ຕາມລໍາດັບ. ໃນປີ 2021 ແມ່ນມີ Form CO-China ທີ່ຫາກໍ່ເລີ່ມຈັດຕັ້ງປະຕິບັດ ແລະ ມີການນໍາໃຊ້ຫຼາຍ ໂດຍມີມູນຄ່າການສົ່ງອອກສູງເປັນອັນດັບທີ 03, ສ່ວນ Form ທີ່ບໍ່ມີການນໍາໃຊ້ໃນປີນີ້ແມ່ນ Form SPT.

**ຕາຕະລາງ 03:** ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າປະຈໍາປີ 2020 ແລະ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ຊື່ຊະນິດແບບພິມ (Forms) | ຈໍານວນແບບພິມ 2020 (ຊຸດ) | ຈໍານວນແບບພິມ 2021 (ຊຸດ) | ມູນຄ່າການສົ່ງອອກ ປີ 2020 | ມູນຄ່າການສົ່ງອອກ ປີ 2021 | ສົມທຽບ (%) |
|---|---|---|---|---|---|
| E | 2,757 | 9,521 | 236,501,613.61 | 1,074,818,994.20 | 354.47 |
| D | 10,550 | 10,214 | 541,399,288.55 | 825,768,651.25 | 52.52 |
| CO-China | - | 1,236 | - | 467,685,421.68 | - |
| REX (Register Exporter System) | 2,921 | 3,045 | 255,738,392.51 | 193,860,982.07 | (24.20) |
| ASEAN Self Certification | 1,379 | 1,741 | 75,391,123.70 | 118,590,673.95 | 57.30 |
| A Normal | 807 | 967 | 90,745,185.66 | 58,891,498.46 | (35.10) |
| AANZ | 255 | 194 | 14,054,385.10 | 16,133,960.36 | 14.80 |
| AJ | 194 | 163 | 15,472,183.69 | 14,594,938.16 | (5.67) |
| S | 1,582 | 94 | 99,827,420.67 | 14,230,217.12 | (85.75) |
| AI | 70 | 97 | 5,103,324.21 | 7,215,370.48 | 41.39 |
| AK | 200 | 302 | 2,306,273.21 | 4,729,002.96 | 105.05 |
| CO-Korea | 166 | 357 | 1,724,776.71 | 1,146,481 | (33.53) |
| DFTP | 20 | 8 | 1,933,970.30 | 472,369.75 | (75.58) |
| AHK | 4 | 17 | 22,784.53 | 100,186.00 | 339.71 |
| APTA | 2 | 1 | 480.00 | 3,000.00 | 525.00 |
| SPT | 27 | - | 18,653,180.00 | - | (100.00) |
| **ລວມທັງໝົດ** | **20,934** | **27,957** | **1,358,874,382** | **2,798,241,747** | **105.92** |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຮູບສະແດງ 01:** ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າປະຈໍາປີ 2020 ແລະ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)




### 2.3.1 ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ (Registered Exporter System: REX)

ການສົ່ງອອກສິນຄ້າ ໂດຍນໍາໃຊ້ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບ REX ແມ່ນຜູ້ສົ່ງອອກສິນຄ້າເປັນຜູ້ດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຕາມລະບຽບແຫຼ່ງກໍາເນີດສິນຄ້າຂອງບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າ, ຊຶ່ງປະເທດດັ່ງກ່າວລວມມີ: ສະຫະພາບເອີຣົບ, ສະວິດເຊີແລນ, ນໍເວ ແລະ ຕວັກກີ. ໂດຍນໍາໃຊ້ໃບ Statement on Origin ປ່ຽນແທນ Form A ຕາມລະບຽບ ແລະ ຂັ້ນຕອນຕ່າງໆຂອງສະຫະພາບເອີຣົບ, ສະວິດເຊີແລນ, ນໍເວ ແລະ ຕວັກກີ.

ໃນປີ 2021 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆ ພາຍໃຕ້ລະບົບ REX ເຫັນວ່າ ມີມູນຄ່າການສົ່ງອອກສູງເຖິງ 193,860,982.07 ໂດລາສະຫະລັດ, ຊຶ່ງມີມູນຄ່າສົ່ງອອກສູງເປັນອັນດັບທີ 04 ຮອງຈາກ Form E, Form D, ແລະ Form CO-China ເມື່ອທຽບໃສ່ໃນປີທີ່ຜ່ານມາ ແມ່ນຫຼຸດລົງ -24.20%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາມຕາຕະລາງ 04), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6203) ມີມູນຄ່າສົ່ງອອກສູງເຖິງ 156,113,419.34 ໂດລາສະຫະລັດ, ຮອງລົງມາແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມີມູນຄ່າສົ່ງອອກ 19,244,118.13 ໂດລາສະຫະລັດ ແລະ ເສື້ອກັນໜາວແບບເຈີຣ໌ຊີ (ລະຫັດພາສີ 6110) ມີມູນຄ່າສົ່ງອອກ 7,092,830.40 ໂດລາສະຫະລັດ. ເມື່ອທຽບການສົ່ງອອກໃນປີ 2021 ໃສ່ກັບປີ 2020 ທີ່ຜ່ານມາເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ແຜ່ນແພທີ່ເຮັດດ້ວຍເສັ້ນໄຍເສັ້ນສັງເຄາະ (ລະຫັດພາສີ 5513) ເພີ່ມຂຶ້ນ 124.29% ແລະ ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ(ລະຫັດພາສີ 6203) ເພີ່ມຂຶ້ນ 96.92%. ໃນຂະນະດຽວກັນ, ສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ຊຸດວອມກິລາ (ລະຫັດພາສີ 6211) ຫຼຸດລົງ -95.90%, ຊຸດສູດ ສໍາລັບແມ່ຍິງ ຫຼື ເດັກຍິງປະກອບເປັນຊຸດ (ລະຫັດພາສີ 6204) ຫຼຸດລົງ -94.61% ແລະ ຊຸດສູດສໍາລັບແມ່ຍິງ ຫຼື ເດັກຍິງ ເຄື່ອງນຸ່ງລວມຊຸມ (ລະຫັດພາສີ 6104) ຫຼຸດລົງ -88.60%.

ສໍາລັບປະເທດທີ່ ສປປ ລາວ ມີມູນຄ່າການສົ່ງອອກຫຼາຍກວ່າໝູ່ 03 ອັນດັບ ແມ່ນ ເຢຍລະມັນ, ສະວີເດນ ແລະ ໂຮນລັງ, ຊຶ່ງມີມູນຄ່າການສົ່ງອອກ 73,432,778.33 ໂດລາສະຫະລັດ, 26,826,271.51 ໂດລາສະຫະລັດ ແລະ 25,111,089.56 ໂດລາສະຫະລັດ ຕາມລໍາດັບ.

ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກພາຍໃຕ້ລະບົບ REX ໃນປີ 2020 ກັບ 2021 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນຫຼາຍແມ່ນ ແບນຊິກ, ຝຣັ່ງ ແລະ ປ໋ອກຕຸຍການ ທີ່ມີເປີເຊັນເພີ່ມຂຶ້ນຄື: 5,419.23%, 1,606.44% ແລະ 62.70% ຕາມລໍາດັບ. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ໂປໂລຍ -84.88% ອີຕາລີ -17.26%, ແລະ ສະວີເດນ -9.76%.

**ຕາຕະລາງ 04:** ລາຍການສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ໃນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ປະຈໍາປີ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 6203 | ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 79,276,471.78 | 156,113,419.34 | 96.92 |
| 2 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 23,095,732.65 | 19,244,118.13 | (16.68) |
| 3 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 10,443,926.77 | 7,092,830.40 | (32.09) |
| 4 | 5513 | ແຜ່ນແພທີ່ເຮັດດ້ວຍເສັ້ນໃຍເສັ້ນສັງເຄາະ, ທີ່ມີເສັ້ນໃຍດັ່ງກ່າວນ້ອຍກວ່າ 85% ໂດຍນໍ້າໜັກ, ປະສົມດ້ວຍຝ້າຍລ້ວນໆ ຫຼື ເປັນສ່ວນໃຫຍ່, ໜັກບໍ່ເກີນ 170 ກຣາມ/ມ2. | 2,008,750.00 | 4,505,370.89 | 124.29 |
| 5 | 6205 | ເສື້ອເຊີດທ໌ ສໍາລັບຜູ້ຊາຍ ຫຼື ເດັກຊາຍ. | 6,916,012.82 | 3,169,277.09 | (54.17) |
| 6 | 6402 | ເກີບອື່ນໆ ທີ່ມີພື້ນນອກ ແລະ ຂ້າງເທິງຂອງເກີບເຮັດດ້ວຍຢາງ ຫຼື ພລາສຕິກ. | 1,060,791.16 | 651,773.07 | (38.56) |
| 7 | 6204 | ຊຸດສູດ ສໍາລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 10,266,778.89 | 552,886.56 | (94.61) |
| 8 | 6105 | ເສື້ອເຊີດທ໌ສໍາລັບຜູ້ຊາຍ ຫຼື ເດັກຊາຍ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 3,744,244.84 | 426,988.98 | (88.60) |
| 9 | 6104 | ຊຸດສູດສໍາລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງລວມຊຸມ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດເສື້ອກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 2,582,468.56 | 344,858.08 | (86.65) |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 10 | 6211 | ຊຸດອອມກິລາ, ຊຸດສຳລັບຫຼິ້ນສະກີ ແລະ ຊຸດລອຍນ້ຳ; ເຄື່ອງນຸ່ງຫົ່ມອື່ນໆ. | 8,396,745.05 | 344,390.67 | (95.90) |
| 11 | ອື່ນໆ | | 107,946,469.98 | 1,415,068.86 | (98.69) |
| ລວມ | | | 255,738,392.51 | 193,860,982.07 | (24.20) |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 05:** ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ໃນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ປະຈຳປີ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ເຢຍລະມັນ | 74,565,161.92 | 73,432,778.33 | (1.52) |
| 2 | ສະວີເດນ | 29,729,120.31 | 26,826,271.51 | (9.76) |
| 3 | ໂຮນລັງ | 19,361,031.87 | 25,111,089.56 | 29.70 |
| 4 | ດານມາກ | 16,611,708.21 | 21,694,275.00 | 30.60 |
| 5 | ປ໋ອກຕຸຍການ | 12,982,648.42 | 21,122,884.25 | 62.70 |
| 6 | ອີຕາລີ | 13,771,938.43 | 11,394,732.74 | (17.26) |
| 7 | ຕວັກກີ | - | 4,293,990.89 | - |
| 8 | ຝຣັ່ງ | 219,154.08 | 3,739,726.15 | 1,606.44 |
| 9 | ແບນຊິກ | 34,691.25 | 1,914,691.55 | 5,419.23 |
| 10 | ໂປໂລຍ | 11,652,061.08 | 1,761,748.31 | (84.88) |
| 11 | ອື່ນໆ | 76,810,876.93 | 2,568,793.78 | (96.66) |
| ລວມ | | 255,738,392.51 | 193,860,982.07 | (24.20) |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN Wide Self - Certification: AWSC)

ການສົ່ງອອກສິນຄ້າ ໂດຍນຳໃຊ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ແມ່ນການດຳເນີນຂັ້ນຕອນຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງຜູ້ສົ່ງອອກສິນຄ້າ ໂດຍນຳໃຊ້ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (Origin Declaration) ໃນການສົ່ງອອກແຕ່ລະຄັ້ງ ຕາມລະບຽບແຫຼ່ງກຳເນີດສິນຄ້າ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ.. ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ຜູ້ໄດ້ຮັບສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ສາມາດອອກໃບ Invoice Declaration ຫຼື Origin Declaration ໂດຍໃຊ້ຄວບຄູ່ກັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ Form D. ຈຸດປະສົງການຢັ້ງຢືນດ້ວຍຕົນເອງ ເພື່ອອຳນວຍຄວາມສະດວກໃນການນຳເຂົ້າ ແລະ ສົ່ງອອກສິນຄ້າ ພາຍໃນບັນດາປະເທດສະມາຊິກອາຊຽນດ້ວຍກັນ. ການຢັ້ງຢືນດັ່ງກ່າວນອກຈາກຈະມີສ່ວນໃນການຊຸກຍູ້ສົ່ງເສີມການເຄື່ອນຍ້າຍສິນຄ້າຢູ່ພາກພື້ນແລ້ວ, ຍັງເປັນການຊ່ວຍຜູ້ປະກອບການສົ່ງອອກໃນການຫຼຸດຜ່ອນຕົ້ນທຶນ ແລະ ເວລາອີກດ້ວຍ. ປະຈຸບັນ, ບັນດາປະເທດພາຄີໄດ້ມີຈຳນວນບໍລິສັດທີ່ເຂົ້າຮ່ວມໂຄງການທັງໝົດ 644 ບໍລິສັດ: ບູໄນ 02 ບໍລິສັດ, ກຳປູເຈຍ 03 ບໍລິສັດ, ອິນໂດ

ເນເຊຍ 127 ບໍລິສັດ, ສປປ ລາວ 20 ບໍລິສັດ, ມາເລເຊຍ 183 ບໍລິສັດ, ພະມ້າ 19 ບໍລິສັດ, ຟີລິບປິນ 12 ບໍລິສັດ, ສິງກະໂປ 74 ບໍລິສັດ, ໄທ 195 ບໍລິສັດ ແລະ ສສ ຫວຽດນາມ 09 ບໍລິສັດ.

ໃນປີ 2021 ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ມີມູນຄ່າສົ່ງອອກທັງໝົດ 118,590,673.95 ໂດລາສະຫະລັດ ແລະ ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10(ຕາມຕາຕະລາງ 06), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຕົ້ນຕໍແມ່ນ ມັນຕົ້ນ (ລະຫັດພາສີ 0714) ມີມູນຄ່າ 2,445,360.00 ໂດລາສະຫະລັດ, ຮອງລົງມາແມ່ນ ຫີນກາວຢິບຊຳ (ລະຫັດພາສີ 2520) ມີມູນຄ່າ 11,474,039.84 ໂດລາສະຫະລັດ ແລະ ນໍ້າ, ລວມທັງນໍ້າແຮ່ທາດ ແລະ ນໍ້າອັດລົມທີ່ຕື່ມນໍ້າຕານ ຫຼື ສານຫວານອື່ນໆ (ລະຫັດພາສີ 2202) ມີມູນຄ່າການສົ່ງອອກ 8,569,646.12 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໃນປີ 2021 ກັບ ປີ 2020 ແລ້ວເຫັນວ່າ ເພີ່ມຂຶ້ນສູງເຖິງ 57.30%. ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ 02 ປະເທດ ຄື: ໄທ ແລະ ສສ ຫວຽດນາມ.

**ຕາຕະລາງ 06:** ລາຍການສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ທີ່ນຳໃຊ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ປະຈຳປີ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອີນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນສາຄູ. | 4,893,358.00 | 82,445,360.00 | 27.05 |
| 2 | 2520 | ຫີນກາວຢິບຊຳ; ແອນໄຮໄດຣທ໌; ພລາສເຕີຣ໌ (ຊຶ່ງປະກອບດ້ວຍຫີນກາວຢິບຊໍ້າທີ່ຜ່ານການເຜົາໃໝ້ ຫຼື ແຄລຊຽມຊັລເຟດທ໌) ຈະແຕ່ງສີ ຫຼື ຕື່ມຕົວເລັ່ງ ຫຼື ຕົວກີດໜ່ວງໃນປະລິມານນ້ອຍ ຫຼື ບໍ່ກໍ່ຕາມ. | - | 11,474,039.84 | - |
| 3 | 2202 | ນໍ້າ, ລວມທັງນໍ້າແຮ່ທາດ ແລະ ນໍ້າອັດລົມທີ່ຕື່ມນໍ້າຕານ ຫຼື ສານຫວານ ອື່ນໆ ຫຼື ແຕ່ງກິ່ນ ແລະ ເຄື່ອງດື່ມອື່ນໆ ບໍ່ມີທາດເຫຼົ້າ, ແຕ່ບໍ່ລວມເອົານໍ້າໝາກໄມ້ ຫຼື ນໍ້າພືດຜັກຂອງລະຫັດເຄົ້າ 20.09. | 8,534,095.58 | 8,569,646.12 | 0.42 |
| 4 | 0704 | ກະລໍ່າປີ, ດອກກະລໍ່າປີ, ກະລໍ່າກຸດ, ຜັກຈຳພວກຜັກກາດຂາວ ແລະພືດຜັກທີ່ຄ້າຍຄືກັນໃນຕະກູນບຣາສສິກາ, ສົດ ຫຼື ແຊ່ເຢັນທີ່ສາມາດບໍລິໂພກໄດ້. | - | 6,816,601.00 | - |
| 5 | 1108 | ແປ້ງສະຕາດຈ໌; ແປ້ງອີນູລິນ. | - | 2,739,500.00 | - |
| 6 | 2008 | ໝາກໄມ້, ຖົ່ວເປືອກແຂງ ແລະ ສ່ວນອື່ນໆ ທີ່ບໍລິໂພກໄດ້ຂອງຕົ້ນໄມ້, ທີ່ຜ່ານການປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນດ້ວຍວິທີອື່ນ, ຈະໃສ່ນໍ້າຕານ ຫຼື ສານຫວານ ອື່ນໆ ຫຼື ເຫຼົ້າ ຫຼື ບໍ່ກໍ່ຕາມ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ. | 326,709.50 | 1,968,464.86 | 502.51 |
| 7 | 0706 | ຫົວກາຣົດ, ຫົວເທີຣ໌ນິບ, ຫົວບີບທີ່ໃຊ້ເຮັດສະລັດ, ສານຊີໄຟ, ເຊເລຣີເອກ, ຫົວຜັກກາດຂາວ ແລະ ຫົວຂອງພືດທີ່ຄ້າຍຄຽງກັນ, ສົດ ຫຼື ແຊ່ເຢັນ. | - | 1,335,600.00 | - |

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 8 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 288,555.32 | 1,333,629.90 | 362.17 |
| 9 | 6402 | ເກີບອື່ນໆ ທີ່ມີພື້ນນອກ ແລະ ຂ້າງເທິງຂອງເກີບເຮັດດ້ວຍຢາງ ຫຼື ພລາສຕິກ. | 611,412.40 | 747,098.40 | 22.19 |
| 10 | 4805 | ເຈ້ຍ ແລະ ເຈ້ຍແຂງອື່ນໆທີ່ບໍ່ໄດ້ເຄືອບ, ເປັນມ້ວນ ຫຼືເປັນແຜ່ນ, ທີ່ບໍ່ໄດ້ຈັດທຳ ຫຼືຜ່ານກຳມະວິທີໄປຫຼາຍກວ່າທີ່ໄດ້ລະບຸໄວ້ໃນຂໍ້ແນະນຳ 3 ຂອງໝວດນີ້. | - | 639,577.73 | - |
| 11 | | ອື່ນໆ | 736,992.90 | 521,156.10 | (29.29) |
| ລວມ | | | 75,391,123.70 | 118,590,673.95 | 57.30 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 07**: ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ໃນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ປະຈຳປີ 2020

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ໄທ | 75,391,123.70 | 103,737,556.38 | 37.60 |
| 2 | ຫວຽດນາມ | - | 14,853,117.57 | - |
| ລວມ | | 75,391,123.70 | 118,590,673.95 | 57.30 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.3 ສິດທິພິເສດທາງການຄ້າແບບທົ່ວໄປ (GSP ຫຼື Form A)

ໃນປີ 2021 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆ ໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດແກ່ ສປປ ລາວ ແບບຝ່າຍດຽວ ໂດຍນຳໃຊ້ Form A ໄດ້ແກ່: ການາດາ, ອິດສະຕາລີ, ນິວຊີແລນ, ຕວັກກີ, ນໍເວ, ລັດເຊຍ, ເບລາຣຸສ, ກາຊັກສະຖານ, ຍີ່ປຸ່ນ, ສ ອາເມລິກາ[3]. ໃນປີ 2021 ມູນຄ່າການສົ່ງອອກທັງໝົດໃນຂອບສັນຍານີ້ມີພຽງ 58,891,498.46 ໂດລາສະຫະລັດ ເມື່ອທຽບໃສ່ ປີ 2020 ທີ່ມີມູນຄ່າການສົ່ງອອກສູງເຖິງ 90,745,185.66 ໂດລາສະຫະລັດ ເຫັນວ່າ ມູນຄ່າການສົ່ງອອກໃນປີ 2021 ຫຼຸດລົງຫຼາຍສົມຄວນສູງເຖິງ -35.10%.

ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາມຕາຕະລາງ 08), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມູນຄ່າ 34,974,892.39 ໂດລາສະຫະລັດ, ຮອງລົງມາແມ່ນ ກາເຟ (ລະຫັດພາສີ 0901)

[3] ສໍາລັບ ສະຫະລັດອາເມລິກາ ແມ່ນບໍ່ຕ້ອງການ Form A. ຖ້າຫາກມີຄວາມຕ້ອງການ Form A ແມ່ນເພື່ອໃຫ້ລະບຸຂໍ້ມູນລາຍລະອຽດ ກ່ຽວກັບ ການຜະລິດ ຫຼື ການປຸງແຕ່ງຢ່າງພຽງພໍຂອງສິນຄ້າເທົ່ານັ້ນ, ເຊິ່ງຄວາມຕ້ອງການດັ່ງກ່າວແມ່ນຂຶ້ນກັບພາສີຂອງເມືອງນັ້ນໆ

ມູນຄ່າ 7,181,656.56 ໂດລາສະຫະລັດ ແລະ ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6203) ມູນຄ່າ 6,074,558.64 ໂດລາສະຫະລັດ.

ສຳລັບປະເທດທີ່ມີການສົ່ງອອກໂດຍນຳໃຊ້ GSP ໃນປີ 2021 ມີພຽງ 06 ປະເທດ ໄດ້ແກ່: ຍີ່ປຸ່ນ, ອັງກິດ, ອິດສະຕາລີ, ສ ອາເມລິກາ, ແບນຊິກ ແລະ ການາດາ. ປະເທດທີ່ ສປປ ລາວ ມີມູນຄ່າການສົ່ງອອກຫຼາຍກວ່າໝູ່ 03 ອັນດັບ ແມ່ນ ຍີ່ປຸ່ນ, ອັງກິດ ແລະ ອິດສະຕາລີ ຊຶ່ງມີມູນຄ່າ 32,281,408.32 ໂດລາສະຫະລັດ, 25,450,128.72 ໂດລາສະຫະລັດ ແລະ 628,480.06 ໂດລາສະຫະລັດ ຕາມລຳດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດທີ່ໃຫ້ GSP ໃນປີ 2021 ກັບ 2020 ເຫັນວ່າແນວໂນ້ມໃນການສົ່ງອອກພາຍໃຕ້ສັນຍານີ້ແມ່ນຫຼຸດລົງຫຼາຍ ຄື: ການາດາ, ສ ອາເມລິກາ ແລະ ຍີ່ປຸ່ນ, ທີ່ມີເປີເຊັນຫຼຸດລົງ ຄື: -93.70%, -63.99% ແລະ -63.66% ຕາມລຳດັບ. ສ່ວນປະເທດອັງກິດ, ອິຕາລີ ແລະ ແບນຊິກ ແມ່ນປະເທດທີ່ມີການສົ່ງໃໝ່ໃນຂອບສັນຍານີ້.

**ຕາຕະລາງ 08:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 47,267,378.86 | 34,974,892.39 | (26.01) |
| 2 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື່ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍ່ຕາມ. | 4,363,347.40 | 7,181,656.56 | 64.59 |
| 3 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອັງງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນ້ຳ). | 13,910,537.27 | 6,074,558.64 | (56.33) |
| 4 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 6,315,419.41 | 2,199,831.86 | 65.17) |
| 5 | 6402 | ເກີບອື່ນໆ ທີ່ມີພື້ນນອກ ແລະ ຂ້າງເທິງຂອງເກີບເຮັດດ້ວຍຢາງ ຫຼື ພລາສຕິກ. | 42,145.50 | 1,217,642.14 | 2,789.14 |
| 6 | 3802 | ຄາຣ໌ບອນທີ່ມີລັກສະນະຕຸ້ນໃຫ້ມີພາວະກຳມັນຕະພາບລັງສີ; ຜະລິດຕະພັນທີ່ໄດ້ຈາກແຮ່ທຳມະຊາດທີ່ມີລັກສະນະຊີວິດ, ສິ່ງດຳຈາກສັດ, ລວມທັງສິ່ງດຳຈາກສັດທີ່ໃຊ້ແລ້ວ. | 879,520.00 | 1,072,000.00 | 21.88 |
| 7 | 6104 | ຊຸດສູດສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງລວມຊຸມ , ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດເສື້ອກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອັງງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງນຸ່ງອາບນ້ຳ), ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 2,777,525.60 | 993,932.80 | (64.22) |
| 8 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, | 6,430,406.15 | 921,557.26 | (85.67) |

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| | | ໂສ້ງ ທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | | | |
| 9 | 6105 | ເສື້ອເຊີດທ໌ສໍາລັບຜູ້ຊາຍ ຫຼື ເດັກຊາຍ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 106,248.15 | 656,686.03 | 518.07 |
| 10 | 6206 | ເສື້ອບລາວສ໌ ສໍາລັບແມ່ຍິງ ຫຼື ເດັກຍິງ, ເສື້ອເຊີດທ໌ ແລະ ເສື້ອເຊີດທ໌ບລາວສ໌. | 5,257,396.47 | 621,513.66 | (88.18) |
| 11 | ອື່ນໆ | | 3,395,260.85 | 2,977,227.12 | (12.31) |
| ລວມ | | | 90,745,185.66 | 58,891,498.46 | (54.09) |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 09**: ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ຍີ່ປຸ່ນ | 88,842,263.58 | 32,281,408.32 | (63.66) |
| 2 | ອັງກິດ | - | 25,450,128.72 | - |
| 3 | ອີດສະຕາລີ | - | 628,480.06 | - |
| 4 | ສ ອາເມລິກາ | 1,225,949.00 | 441,504.96 | (63.99) |
| 5 | ແບນຊິກ | - | 55,746.00 | - |
| 6 | ການາດາ | 543,443.08 | 34,230.40 | (93.70) |
| 7 | ອື່ນໆ | 133,530.00 | - | (100.00) |
| ລວມ | | 90,745,185.66 | 58,891,498.46 | (35.10) |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.4 ສັນຍາການຄ້າດ້ານສິນຄ້າອາຊຽນ (Form D)

ໃນປີ 2021 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆຂອງ ສປປ ລາວ ໄປຍັງ 08 ປະເທດສະມາຊິກອາຊຽນ ໂດຍນໍາໃຊ້ສັນຍາການຄ້າດ້ານສິນຄ້າອາຊຽນ (Form D) ມີມູນຄ່າສົ່ງອອກສູງເຖິງ 825,768,651.25 ໂດລາສະຫະລັດ ແລະ ມູນຄ່າສົ່ງອອກຂອງ Form ນີ້ແມ່ນສູງເປັນອັນດັບທີ 02 ຮອງຈາກ Form E, ເມື່ອສົມທຽບໃສ່ມູນຄ່າການສົ່ງອອກຂອງປີ 2020 ຈໍານວນ 541,399,288.55 ໂດລາສະຫະລັດ ເຫັນວ່າ ເພີ່ມຂຶ້ນຫຼາຍສູງເຖິງ 52.52%. ເມື່ອສົມທຽບມູນຄ່າການສົ່ງອອກ Form D ໃສ່ກັບການສົ່ງອອກຂອງ Form ຊະນິດຕ່າງໆແລ້ວເຫັນວ່າ Form D ມີການນໍາໃຊ້ຫຼາຍທີ່ສຸດເປັນອັນດັບທີສອງຂອງປີ 2021 ຮອງຈາກ Form E.

ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາມຕາຕະລາງ 10), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 258,832,384.39 ໂດລາສະຫະລັດ, ຮອງລົງມາແມ່ນ ຢາງທໍາມະຊາດ (ລະຫັດພາສີ 4001) ມູນຄ່າ 112,864,922.48 ໂດລາສະຫະລັດ ແລະ ກາເຟ (ລະຫັດພາສີ 0901) ມູນຄ່າ 69,819,142.62 ໂດລາສະຫະລັດ. ນອກຈາກນັ້ນ, ຍັງສັງເກດເຫັນວ່າ ສິນຄ້າທີ່ສົ່ງອອກ 10 ອັນດັບຕົ້ນໃນຂອບສັນຍານີ້ໃນປີ 2020 ສ່ວນຫຼາຍແມ່ນ ມີທ່າອ່ຽງເພີ່ມຂຶ້ນຫຼາຍເມື່ອທຽບໃສ່ປີທີ່ຜ່ານມາ ເຊັ່ນ: ນໍ້າຕານ, ຫີນກາວຫຍິບຊໍາ, ກາເຟ,

ຢາງທຳມະຊາດ, ມັນຕົ້ນ, ແປ້ງມາດຕາສ, ໝາກກ້ອຍ ແລະ ຊີເມັນພອດແລນ; ໂດຍເປີເຊັນເພີ່ມຂຶ້ນ ແມ່ນ 2,662.57%, 127.27%, 113.85%, 111.69%, 83.19%, 24.86%, 23.24% ແລະ 11.66% ຕາມລຳດັບ.

ສຳລັບປະເທດທີ່ ສປປ ລາວ ມີການສົ່ງອອກຫຼາຍກວ່າໝູ່ 03 ອັນດັບຕົ້ນ ໄດ້ແກ່: ສສ ຫວຽດນາມ ມູນຄ່າ 425,548,382.62 ໂດລາສະຫະລັດ, ຮອງລົງມາແມ່ນ ໄທ ມູນຄ່າ 367,097,860.78 ໂດລາສະຫະລັດ ແລະ ກຳປູເຈຍ ມູນຄ່າ 17,719,171.96 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກອາຊຽນ ໃນປີ 2021 ກັບ 2020 ເຫັນວ່າ ປະເທດທີ່ມີການສົ່ງອອກເພີ່ມຂຶ້ນຫຼາຍແມ່ນ ກຳປູເຈຍ, ສສ ຫວຽດນາມ, ມາເລເຊຍ, ຟີລິບປິນ ແລະ ໄທ; ໂດຍອັດຕາເພີ່ມຂຶ້ນແມ່ນ 204.28%, 108.36%, 70.85%, 55.96% ແລະ 15.70% ຕາມລຳດັບ. ສ່ວນປະເທດທີ່ມີເປີເຊັນການສົ່ງອອກຫຼຸດລົງແມ່ນ ສິງກະໂປ, ພະມ້າ ແລະ ອິນໂດເນເຊຍ; ຊຶ່ງເປີເຊັນການຫຼຸດລົງແມ່ນ -90.50%, -85.49% ແລະ -16.43% ຕາມລາດັບ.

**ຕາຕະລາງ 10:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (Form D)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະ ກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອິນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນສາຄູ. | 141,289,370.00 | 258,832,384.39 | 83.19 |
| 2 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 53,315,183.20 | 12,864,922.48 | 111.69 |
| 3 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອິນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື່ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 2,649,102.99 | 69,819,142.62 | 113.85 |
| 4 | 2716 | ພະລັງງານໄຟຟ້າ. | 65,277,734.13 | 64,966,908.26 | (0.48) |
| 5 | 2523 | ຊີເມັນ ພອດແລນ, ຊີເມັນ ອະລູມີນັສ, ຊີເມັນສະແລັກ, ຊີເມັນ ຊຸເປີຣ໌ຊັລເຟດທ໌ ແລະ ຊີເມັນ ໄຮດຣໍລິກ ທີ່ຄ້າຍຄືກັນ, ຈະແຕ່ງສີ ຫຼື ເປັນຊີເມັນເມັດ (ຄລິງເກີຣ໌) ຫຼື ບໍ່ກໍ່ຕາມ. | 53,766,179.68 | 60,035,900.22 | 11.66 |
| 6 | 1701 | ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນ້ຳຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 1,133,600.00 | 31,316,440.00 | 2,662 |
| 7 | 1108 | ແປ້ງສະຕາດຈ໌; ແປ້ງອິນູລິນ. | 23,977,632.05 | 29,937,605.23 | 24.86 |
| 8 | 0803 | ໝາກກ້ອຍ, ລວມທັງໝາກໄມ້ຕະກູນກ້ອຍ, ສົດ ຫຼື ແຫ້ງ. | 22,768,773.15 | 28,060,411.77 | 23.24 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 9 | 2520 | ຫີນກາວຢິບຊຳ; ແອນໄຮໄດຣທ໌; ພລາສເຕີຣ໌ (ຊຶ່ງປະກອບດ້ວຍຫີນກາວຢິບຊຳທີ່ຜ່ານການເຜົາໃໝ້ ຫຼື ແຄລຊຽມຊັລເຟດທ໌) ຈະແຕ່ງສີ ຫຼື ຕື່ມຕົວເລັ່ງ ຫຼື ຕົວກົດໜ່ວງໃນປະລິມານນ້ອຍ ຫຼື ບໍ່ກໍ່ຕາມ. | 6,885,611.69 | 15,649,226.52 | 127.27 |
| 10 | 0810 | ໝາກໄມ້ອື່ນໆ, ສົດ. | 14,768,120.13 | 11,037,382.47 | (25.26) |
| 11 | ອື່ນໆ | | 125,567,981.53 | 143,248,327.30 | 14.08 |
| ລວມ | | | 541,399,288.55 | 825,768,651.25 | 52.52 |

ແຫຼ່ງຂໍ້ມູນ: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 11:** ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (Form D)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ຫວຽດນາມ | 204,238,769.77 | 425,548,382.62 | 108.36 |
| 2 | ໄທ | 317,283,001.24 | 367,097,860.78 | 15.70 |
| 3 | ກຳປູເຈຍ | 5,823,266.34 | 17,719,171.96 | 204.28 |
| 4 | ຟີລິບປິນ | 4,769,843.66 | 7,439,118.11 | 55.96 |
| 5 | ອິນໂດເນເຊຍ | 7,524,998.90 | 6,288,756.94 | (16.43) |
| 6 | ມາເລເຊຍ | 930,546.60 | 1,589,856.84 | 70.85 |
| 7 | ສິງກະໂປ | 694,493.50 | 66,004.00 | (90.50) |
| 8 | ພະມ້າ | 134,368.54 | 19,500.00 | (85.49) |
| ລວມ: | | 541,399,288.55 | 825,768,651.25 | 52.52 |

ແຫຼ່ງຂໍ້ມູນ: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.5 ສັນຍາພາຍໃຕ້ເຂດການຄ້າເສລີອາຊຽນ - ສປ ຈີນ (Form E)

ໃນປີ 2021 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ສປ ຈີນ ພາຍໃຕ້ເຂດການຄ້າເສລີ ອາຊຽນ - ສປ ຈີນ (Form E) ມີມູນຄ່າສົ່ງອອກສູງເຖິງ 1,074,818,994.20 ໂດລາສະຫະລັດ ແລະ ມູນຄ່າສົ່ງອອກຂອງ Form ນີ້ແມ່ນສູງເປັນອັນດັບທີ 01 ສຳລັບການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ. ເມື່ອທຽບໃສ່ມູນຄ່າການສົ່ງອອກໃນປີ 2021 ກັບປີທີ່ຜ່ານມາມີພຽງ 236,501,613.61 ໂດລາສະຫະລັດ ເຫັນວ່າ ເພີ່ມຂຶ້ນສູງເຖິງ 354.47%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາມຕາຕະລາງ 12), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 226,026,210.48 ໂດລາສະຫະລັດ, ຮອງລົງມາແມ່ນ ເຍື່ອໄມ້ເຄມີ ຊະນິດລະລາຍໄດ້ (ລະຫັດພາສີ 4702) ມູນຄ່າ 214,794,283.33 ໂດລາສະຫະລັດ ແລະ ໝາກກ້ວຍ (ລະຫັດພາສີ 0803) ມູນຄ່າ 214,226,665.91 ໂດລາສະຫະລັດ. ເມື່ອສົມທຽບລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ກັບປີທີ່ຜ່ານມາເຫັນວ່າ ສິນຄ້າສ່ວນຫຼາຍມີແນວໂນ້ມເພີ່ມຂຶ້ນຫຼາຍ ເປັນຕົ້ນແມ່ນ ໝາກກ້ວຍ, ຢາງທຳມະຊາດ, ແປ້ງສະຕາດຈ໌, ແຮ່ເຫຼັກ, ປຸ໋ຍ, ເຂົ້າ ແລະ ຄຳ; ມີເປີເຊັນເພີ່ມຂຶ້ນ ຄື: 630.36%, 322.08%, 316.22%,

245.86%, 201.22%, 154.76% ແລະ 135.75% ຕາມລຳດັບ. ສ່ວນລາຍການສິນຄ້າທີ່ເກີດຂຶ້ນໃໝ່ ແລະ ມີການສົ່ງອອກຫຼາຍໃນຂອບສັນຍານີ້ແມ່ນ ເຍື່ອໄມ້ເຄມີ, ໝາກຖົ່ວໂລກັສທ໌ ແລະ ໝາກແຕງເມລ່ອນ; ມີມູນຄ່າການສົ່ງອອກສູງເຖິງ 214,794,283.33 ໂດລາສະຫະລັດ, 43,010,000.00 ໂດລາສະຫະລັດ ແລະ 30,706,077.00 ໂດລາສະຫະລັດ.

ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ໃນປີ 2021 ມີ 05 ປະເທດ ຄື: ສປ ຈີນ, ສສ ຫວຽດນາມ, ໄທ, ກຳປູເຈຍ ແລະ ມາເລເຊຍ. ຊຶ່ງ 03 ປະເທດຕົ້ນຕໍທີ່ມີການສົ່ງອອກ ປະກອບມີ: ສປ ຈີນ, ສສ ຫວຽດນາມ ແລະ ໄທ; ມີມູນຄ່າການສົ່ງອອກ 1,029,423,680.91 ໂດລາສະຫະລັດ, 44,099,175.20 ໂດລາສະຫະລັດ ແລະ 1,125,898.09 ໂດລາສະຫະລັດ ຕາມລຳດັບ.

**ຕາຕະລາງ 12:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສປ ຈີນ (Form E)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍຸ, ຊິເຄິລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 53,549,945.61 | 226,026,210.48 | 322.08 |
| 2 | 4702 | ເຍື່ອໄມ້ເຄມີ, ຊະນິດລະລາຍໄດ້. | - | 214,794,283.33 | - |
| 3 | 0803 | ໝາກກ້ວຍ, ລວມທັງໝາກໄມ້ຕະກຸນກ້ວຍ, ສົດ ຫຼື ແຫ້ງ. | 29,331,712.52 | 214,226,665.91 | 630.36 |
| 4 | 3104 | ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ, ທີ່ມີສ່ວນປະສົມໂພແທສຊຽມ. | 32,405,180.55 | 97,611,725.54 | 201.22 |
| 5 | 2601 | ແຮ່ເຫຼັກ ແລະ ສິ່ງທີ່ກ່ຽວຂ້ອງຂອງແຮ່ເຫຼັກ, ລວມທັງແຮ່ເຫຼັກໄພໄຣທ໌ ທີ່ອົບແລ້ວ. | 19,553,033.00 | 67,626,815.00 | 245.86 |
| 6 | 1212 | ໝາກຖົ່ວໂລກັສທ໌, ສາຫຼ່າຍທະເລ ແລະ ສາຫຼ່າຍທະເລອື່ນໆ, ຜັກກາດຫວານທີ່ໃຫ້ນ້ຳຕານ ແລະ ອ້ອຍສົດ, ແຊ່ເປັນແຊ່ແຂງ ຫຼື ແຫ້ງ, ຈະບົດເປັນຜົງ ຫຼື ບໍ່ກໍ່ຕາມ; ເມັດແຂງ ແລະ ເນື້ອໃນຂອງແກ່ນໝາກໄມ້ ແລະ ຜະລິດຕະພັນອື່ນໆ ທີ່ໄດ້ຈາກພືດຜັກ (ລວມທັງຮາກຊິໂຄຣີບໍ່ທັນຂົ້ວ, ຊະນິດຊິໂຄຣຽມ ອິນທິບັສ ຊາຕິວຸມ) ໃຊ້ເປັນອາຫານຄົນເປັນຕົ້ນຕໍ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ. | - | 43,010,000.00 | - |
| 7 | 1108 | ແປ້ງສະຕາດຈ໌; ແປ້ງອິນູລິນ. | 8,027,394.50 | 33,411,826.25 | 316.22 |
| 8 | 0807 | ໝາກແຕງເມລ່ອນ (ລວມທັງໝາກໂມ) ແລະ ໝາກຫຸ່ງ, ສົດ. | - | 30,706,077.00 | - |
| 9 | 7108 | ຄຳ (ລວມທັງຄຳຍ້ອມດ້ວຍຄຳຂາວ) ຍັງບໍ່ທັນຕົບແຕ່ງເປັນຮູບຮ່າງ ຫຼື ຢູ່ໃນລັກຊະນະເຄິ່ງສຳເລັດຮູບ ຫຼື ເປັນຜົງ. | 9,661,590.92 | 22,777,204.61 | 135.75 |
| 10 | 1006 | ເຂົ້າ. | 5,216,282.00 | 13,288,975.00 | 154.76 |
| 11 | | ອື່ນໆ | 8,756,474.51 | 111,339,211.08 | 41.37 |
| | | ລວມ | 36,501,613.61 | 1,074,818,994.20 | 354.47 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 13:** ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສປ ຈີນ(Form E)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ຈີນ | 230,013,299.61 | 1,029,423,680.91 | 347.55 |
| 2 | ຫວຽດນາມ | 6,000,400.00 | 44,099,175.20 | 634.94 |
| 3 | ໄທ | 484,564.80 | 1,125,898.09 | 132.35 |
| 4 | ກຳປູເຈຍ | - | 166,100.00 | - |
| 5 | ມາເລເຊຍ | 3,349.20 | 4,140.00 | 23.61 |
| ລວມ | | 236,501,613.61 | 1,074,818,994.20 | 354.47 |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.6 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S)

ໃນປີ 2021 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປ ສສ ຫວຽດນາມ ໂດຍນຳໃຊ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S) ມີມູນຄ່າສົ່ງອອກ 14,230,217.12 ໂດລາສະຫະລັດ ເມື່ອທຽບໃສ່ມູນຄ່າການສົ່ງອອກໃນປີ 2020 ເຫັນວ່າ ຫຼຸດລົງເຖິງ -85.75%. ໃນນັ້ນ, ລາຍການສົ່ງອອກໃນຂອບສັນຍານີ້ມີພຽງ 06 ລາຍການ (ຕາມຕາຕະລາງ 14), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ນ້ຳຕານ (ລະຫັດພາສີ 1701) ມູນຄ່າ 14,088,621.96 ໂດລາສະຫະລັດ, ຮອງລົງມາແມ່ນ ມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 56,810.00 ໂດລາສະຫະລັດ ແລະ ໄມ້ທີ່ເລື່ອຍ (ລະຫັດພາສີ 4407) ມູນຄ່າ 33,260.00 ໂດລາສະຫະລັດ. ເມື່ອສົມທຽບລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ຂອງປີ 2021 ກັບປີຜ່ານມາ ເຫັນວ່າ ລາຍການສິນຄ້າສົ່ງອອກຕົ້ນຕໍໃນປີ 2020 ເຫັນວ່າມີພຽງແຕ່ ນ້ຳຕານ ລາຍການດຽວທີ່ມີເປີເຊັນເພີ່ມຂຶ້ນແມ່ນ 200.65%. ສາເຫດທີ່ເຮັດໃຫ້ການສົ່ງອອກພາຍໃຕ້ຂອບສັນຍານີ້ຫຼຸດລົງຫຼາຍໃນປີ 2021 ນີ້ຍ້ອນວ່າ ຜູ້ປະກອບການຂອງ ສປປ ລາວ ບໍ່ສາມາດສົ່ງອອກໂດຍນຳໃຊ້ Form S ໄດ້ໃນຊ່ວງຕົ້ນປີຫາກາງປີນີ້ ເນື່ອງຈາກວ່າ ທາງ ສສ ຫວຽດນາມ ໄດ້ອອກດຳລັດໃນການຈັດຕັ້ງປະຕິບັດສັນຍາດັ່ງກ່າວ, ພາຍຫຼັງທີ່ ສສ ຫວຽດນາມ ສຳເລັດການປັບປຸງດຳລັດແລ້ວ ຜູ້ສົ່ງອອກຂອງ ສປປ ລາວ ຈຶ່ງສາມາດສົ່ງອອກໂດຍນຳໃຊ້ Form S ຢ່າງເປັນປົກກະຕິໃນ ເດືອນຕຸລາ 2021 ເປັນຕົ້ນມາ.

**ຕາຕະລາງ 14:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ຫວຽດນາມ (Form S)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 1701 | ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນ້ຳຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 4,685,983.00 | 14,088,621.96 | 200.65 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 2 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອິນູລິນສູງ, ສົດ, ແຊ່ເປັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ ຫຼື ບໍ່ກໍ່ຕາມ; ແກນສາຄູ. | 7,308,433.05 | 56,810.00 | (99.22) |
| 3 | 4407 | ໄມ້ທີ່ເລື່ອຍ ຫຼື ຖາກຕາມລວງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼື ເຂົ້າຫຼົ້ມແລ້ວ ຫຼື ບໍ່ກໍ່ຕາມ, ມີຄວາມໜາເກີນ 6 ມີນລີແມັດ. | - | 33,260.00 | - |
| 4 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລວດລາຍສຳລັບປູພື້ນແບບປາກເກ ທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບ ປາຍ ຫຼືໜ້າໄມ້ ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, ຂໍ້ຕໍ່ຮູບຕົວວີ, ກິ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຂົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | - | 28,768.22 | - |
| 5 | 9403 | ເຄື່ອງເຟີນີເຈີອື່ນໆ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ. | - | 14,412.54 | - |
| 6 | 4403 | ໄມ້ບໍ່ທັນແປຮູບ, ຈະເອົາເປືອກ, ຕົວອອກແລ້ວ ຫຼື ເຮັດເປັນສີ່ຫຼ່ຽມຫຍາບໆ ແລ້ວ ຫຼື ບໍ່ກໍ່ຕາມ. | - | 8,344.40 | - |
| 11 | | ອື່ນໆ | 87,833,004.62 | - | (100.00) |
| | | <u>ລວມ</u> | <u>99,827,420.67</u> | <u>14,230,217.12</u> | <u>(85.75)</u> |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.7 ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອິນເດຍ ໂດຍນຳໃຊ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI) ມີມູນຄ່າ 7,215,370.48 ໂດລາສະຫະລັດ ເມື່ອທຽບໃສ່ການສົ່ງອອກໃນປີ 2020 ມີມູນຄ່າການສົ່ງອອກ 5,103,324.21 ໂດລາສະຫະລັດ ເຫັນວ່າເພີ່ມຂຶ້ນຫຼາຍພໍສົມຄວນ 41.39%. ໃນນັ້ນ, ລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາມຕາຕະລາງ 15), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 2,903,764.66 ໂດລາສະຫະລັດ, ຮອງລົງມາແມ່ນ ເສັ້ນໄຍນຳແສງ (ລະຫັດພາສີ 9001) ມູນຄ່າ 2,160,845.80 ໂດລາສະຫະລັດ ແລະ ຊືນທີ່ຍັງບໍ່ທັນຂຶ້ນຮູບຮ່າງ (ລະຫັດພາສີ 7801) ມູນຄ່າ 807,428.82 ໂດລາສະຫະລັດ. ສຳລັບສິນຄ້າທີ່ມີການສົ່ງອອກເພີ່ມຂຶ້ນໃນປີ 2021 ໄດ້ແກ່: ເສັ້ນລວດ, ເສັ້ນໄຍນຳແສງ, ໄມ້ອັດ ແລະ ທອງບໍລິສຸດ; ຊຶ່ງເປີເຊັນເພີ່ມຂຶ້ນແມ່ນ 120.04%, 104.58%, 52.59% ແລະ 2.36% ຕາມລຳດັບ. ສ່ວນລາຍການສິນຄ້າທີ່ມີເປີເຊັນຫຼຸດລົງແມ່ນ ໄມ້ ຫຼຸດລົງ -18.44% ແລະ ແຜ່ນສຳລັບເຮັດໄມ້ເວີເນຍ ຫຼຸດລົງ -10.25%.

ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີນີ້ແມ່ນມີພຽງ 02 ປະເທດຄື: ໄທ ແລະ ອິນເດຍ ທີ່ມີມູນຄ່າສົ່ງອອກ 5,064,610.46 ໂດລາສະຫະລັດ ແລະ 2,150,760.02 ໂດລາສະ

ຫະລັດ ຕາມລຳດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2021 ກັບ ປີ 2020 ເຫັນວ່າມີເປີເຊັນເພີ່ມຂຶ້ນ ປະເທດໄທ ເພີ່ມຂຶ້ນ 78.53% ແລະ ອິນເດຍ 0.24%.

**ຕາຕະລາງ 15:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 7403 | ທອງບໍລິສຸດ ແລະ ທອງປະສົມເປັນເນື້ອດຽວ, ທີ່ຍັງບໍ່ໄດ້ຂຶ້ນຮູບຮ່າງ. | 2,836,835.56 | 2,903,764.66 | 2.36 |
| 2 | 9001 | ເສັ້ນໃຍນຳແສງ ແລະ ກຸ່ມເສັ້ນໃຍນຳແສງຊະນິດເຄເບີລ; ເຄເບີລໃຍນຳແສງ ນອກຈາກເຄເບີລໃຍນຳແສງທີ່ລະບຸໄວ້ໃນລະຫັດເກົ້າ 85.44; ແຜ່ນບາງ ແລະ ແຜ່ນເຮັດດ້ວຍວັດຖຸໂພລາໄຣຊີງ; ເລນຊ໌ (ລວມທັງຄອນແທກແລນຊ໌), ປຣິຊຶມ, ແວ່ນແຍງ ແລະ ອຸປະກອນອື່ນໆ ທາງທັດສະນະສາດທີ່ເຮັດດ້ວຍວັດຖຸໃດກໍ່ຕາມ, ບໍ່ໄດ້ປະກອບ, ນອກຈາກອີງປະກອບທີ່ເຮັດດ້ວຍແກ້ວ ທີ່ຍັງບໍ່ທັນຄືບແຕ່ງ ເພື່ອໃຊ້ງານທາງທັດສະນະສາດ. | 1,056,237.30 | 2,160,845.80 | 104.58 |
| 3 | 7801 | ຊືນທີ່ຍັງບໍ່ທັນຂຶ້ນຮູບຮ່າງ (ຫຍາບ). | - | 807,428.82 | - |
| 4 | 4408 | ແຜ່ນສຳລັບເຮັດໄມ້ເວີເນຍ (ລວມທັງແຜ່ນໄມ້ທີ່ຝານເປັນແຜ່ນບາງໆ),ສຳລັບເຮັດໄມ້ອັດ ຫຼື ໄມ້ທີ່ຄ້າຍຄືກັນ ແລະ ໄມ້ອື່ນໆ, ເລື່ອຍຕາມທາງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼື ເຂົ້າຫຼົ້ມແລ້ວ ຫຼື ບໍ່ກໍ່ຕາມ, ມີຄວາມໜາບໍ່ເກີນ 6ມມ. | 568,420.60 | 510,143.04 | (10.25) |
| 5 | 8544 | ເສັ້ນລວດ ແລະ ເຄເບີລ (ລວມທັງເຄເບີລຮ່ວມແກ່ນ) ທີ່ຫຸ້ມດ້ວຍວັດຖຸຕ້ານກັບການຮົ່ວຂອງກະແສສຳລັບໄຟຟ້າ (ລວມເຖິງຊະນິດທີ່ເຄືອບດ້ວຍນ້ຳກັ່ງ ຫຼື ໃສ່ອົກຊີ ຫຼື ບໍ່ກໍ່ຕາມ), ຈະຕິດກັບຂົ້ວຕໍ່ ຫຼື ບໍ່ກໍ່ຕາມ; ເຄເບີລໃຍນຳແສງ, ປະກອບດ້ວຍໃຍທີ່ຫຸ້ມປອກແຕ່ລະເສັ້ນ ຈະມີວັດຖຸຕົວນຳໄຟຟ້າ ຫຼື ຕິດກັບຂົ້ວຕໍ່. | 171,670.99 | 377,748.67 | 120.04 |
| 6 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼື ບໍ່ກໍ່ຕາມ; ເປືອກ ແລະ ເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍ່ຕາມ. | - | 246,575.00 | - |
| 7 | 4412 | ໄມ້ອັດ, ໄມ້ອັດວີເນຍ ແລະ ໄມ້ລາມີເນຕິດທີ່ຄ້າຍຄຽງ. | 89,269.83 | 136,217.36 | 52.59 |
| 8 | 1301 | ຂີ້ຄັ່ງ; ຢາງໄມ້ທຳມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົນໂອລີ ໂອເຣຊິນ (ຕົວຢ່າງ, ຢາງຫອມທຳມະຊາດ). | - | 33,700.00 | - |
| 9 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລວດລາຍສຳລັບປູພື້ນແບບປາກເກ ທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບ ປາຍ ຫຼື ໜ້າໄມ້ ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, | 32,383.58 | 26,413.00 | (18.44) |

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| | | ຂໍ້ຕໍ່ຮູບຕົວວີ, ຄົ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຊົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | | | |
| 10 | 2603 | ແຮ່ທອງແດງ ແລະ ຫົວແຮ່ດັ່ງກ່າວ. | - | 10,484.13 | - |
| 11 | | ອື່ນໆ | 348,506.35 | 2,050.00 | (99.41) |
| | | ລວມ | 5,103,324.21 | 7,215,370.48 | 41.39 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 16**: ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ໄທ | 2,836,835.56 | 5,064,610.46 | 78.53 |
| 2 | ອິນເດຍ | 2,145,514.95 | 2,150,760.02 | 0.24 |
| 3 | ອື່ນໆ | 120,973.70 | - | - |
| | ລວມ | 5,103,324.21 | 7,215,370.48 | 41.39 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.8 ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ສ ເກົາຫຼີ ໂດຍນຳໃຊ້ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK) ມີມູນຄ່າ 4,729,002.96 ໂດລາສະຫະລັດ ເມື່ອທຽບໃສ່ປີ 2020 ມີມູນຄ່າ 2,306,231.21 ໂດລາສະຫະລັດ ເຫັນວ່າ ເພີ່ມຂຶ້ນສູງເຖິງ 105.05%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາມຕາຕະລາງ 17), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຖ່ານໄມ້ (ລະຫັດພາສີ 4402) ມູນຄ່າ 1,827,840.37 ໂດລາສະຫະລັດ, ຮອງລົງມາແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມູນຄ່າ 1,422,247.72 ໂດລາສະຫະລັດ ແລະ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 376,283.96 ໂດລາສະຫະລັດ. ສຳລັບປີ 2020 ລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ 03 ລາຍການ ແມ່ນ ປໍຈຸດ ແລະ ໃຍຕ່ຳແຜ່ນທີ່ໄດ້ຈາກພືດອື່ນໆ (ລະຫັດພາສີ 5303) ມູນຄ່າ 910,073.30 ໂດລາສະຫະລັດ, ຮອງລົງມາແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມູນຄ່າ 389,465.26 ໂດລາສະຫະລັດ ແລະ ລົດຖີບສາມລໍ້ ແລະ ເຄື່ອງຫຼິ້ນທີ່ມີລໍ້ທີ່ຄ້າຍຄືກັນ (ລະຫັດພາສີ 9503) ມູນຄ່າ 376,283.96 ໂດລາສະຫະລັດ. ເມື່ອສົມທຽບລາຍການສິນຄ້າທີ່ມີການສົ່ງອອກ 03 ລາຍການຕົ້ນຕໍ ໃນປີ 2021 ກັບ ປີ 2020 ທີ່ຜ່ານມາ ເຫັນວ່າ ມີພຽງສິນຄ້າດຽວທີ່ມີເປີເຊັນການສົ່ງອອກເພີ່ມຂຶ້ນຫຼາຍສູງເຖິງ 265.18% ແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403).

ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວນີ້ມີພຽງ ສ ເກົາຫຼີ ພຽງປະເທດດຽວ, ເມື່ອສົມທຽບການສົ່ງອອກປີນີ້ກັບປີທີ່ຜ່ານມາເຫັນວ່າ ເພີ່ມຂຶ້ນ 105.05%.

ຕາຕະລາງ 17: ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 4402 | ຖ່ານໄມ້ (ລວມທັງຖ່ານທີ່ໄດ້ຈາກເປືອກແຂງ ຫຼື ນັດ), ຈະເກາະ ຫຼື ຕິດກັນເປັນກ້ອນ ຫຼື ບໍ່ກໍ່ຕາມ. | 200.00 | 1,827,840.37 | 913,820.19 |
| 2 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 389,465.26 | 1,422,247.72 | 265.18 |
| 3 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຢູ, ຊິເຄິລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | - | 319,760.70 | - |
| 4 | 9503 | ລົດຖີບສາມລໍ້, ສະກຸດເຕີ້, ລົດທີ່ໃຊ້ຖີບ ແລະ ເຄື່ອງຫຼິ້ນທີ່ມີລໍ້ທີ່ຄ້າຍຄືກັນ; ລໍ້ຍູ້ຕຸກກະຕາ; ຕຸກກະຕາ; ຂອງຫຼິ້ນອື່ນໆ; ຫຸ່ນຈຳລອງຫຍໍ້ສ່ວນຂະໜາດ ('ມາດຕາສ່ວນ') ແລະ ເຄື່ອງຫຼິ້ນເສີມສ້າງພັດທະນາການທີ່ຄ້າຍຄືກັນ, ຈະເຄື່ອນໄຫວໄດ້ ຫຼື ບໍ່ກໍ່ຕາມ; ລວມທັງເຄື່ອງຫຼິ້ນທີ່ໃຊ້ຝຶກສະໝອງເກມຕໍ່ພາບປິດສະໜາ ທຸກຊະນິດ. | 376,283.96 | 257,060.99 | (31.68) |
| 5 | 6107 | ໂສ້ງຊ້ອນໃນສຳລັບຜູ້ຊາຍ ຫຼື ເດັກຊາຍ, ໂສ້ງຊ້ອນໃນຂາສັ້ນ, ເສື້ອນຸ່ງນອນ, ຊຸດນຸ່ງນອນ, ເສື້ອຄຸມອາບນໍ້າ, ເສື້ອຄຸມແຕ່ງຕົວ ແລະ ເຄື່ອງຄ້າຍຄຽງ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 150.00 | 223,946.66 | 149,197.77 |
| 6 | 4805 | ເຈ້ຍ ແລະ ເຈ້ຍແຂງອື່ນໆທີ່ບໍ່ໄດ້ເຄືອບ, ເປັນມ້ວນ ຫຼື ເປັນແຜ່ນ, ທີ່ບໍ່ໄດ້ຈັດທຳ ຫຼືຜ່ານກຳມະວິທີໄປຫຼາຍກວ່າທີ່ໄດ້ລະບຸໄວ້ໃນຂໍ້ແນະນຳ 3 ຂອງໝວດນີ້. | - | 135,116.53 | - |
| 7 | 5303 | ປໍຈຸດ ແລະ ໃຍຕໍ່າແຜ່ນທີ່ໄດ້ຈາກພືດອື່ນໆ (ນອກຈາກປ່ານລີນິນ, ປ່ານແທ້ ແລະ ປ່ານຣາມີ), ດິບ ຫຼື ຜ່ານກຳມະວິທີແລ້ວ ແຕ່ບໍ່ໄດ້ລັງ; ເສັ້ນໃຍທີ່ບໍ່ໄດ້ຂະໜາດ ແລະ ເສດຂອງໃຍເຫຼົ່ານີ້ (ລວມທັງເສດຂອງເສັ້ນ ແລະ ກຸ່ມໃຍທີ່ສາງໄດ້ຈາກໃຍດັ່ງກ່າວ). | 910,073.30 | 93,156.00 | (89.76) |
| 8 | 4419 | ເຄື່ອງໃຊ້ເທິງໂຕະອາຫານ ແລະ ເຄື່ອງໃຊ້ໃນເຮືອນຄົວ, ທີ່ເຮັດດ້ວໄມ້. | - | 74,658.69 | - |
| 9 | 4408 | ແຜ່ນສຳລັບເຮັດໄມ້ເວີເນຍ (ລວມທັງແຜ່ນໄມ້ທີ່ຝານເປັນແຜ່ນບາງໆ),ສຳລັບເຮັດໄມ້ອັດ ຫຼື ໄມ້ທີ່ຄ້າຍຄືກັນ ແລະໄມ້ອື່ນໆ, ເລື່ອຍຕາມທາງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼື ເຂົ້າຫຼິ້ມແລ້ວ ຫຼື ບໍ່ກໍ່ຕາມ, ມີຄວາມໜາບໍ່ເກີນ 6ມມ. | - | 70,131.00 | - |
| 10 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 49,163.50 | 53,886.54 | 9.61 |
| 11 | | ອື່ນໆ | 580,895.19 | 251,197.76 | (56.76) |
| | | ລວມ | 2,306,231.21 | 4,729,002.96 | 105.05 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.9 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຍີ່ປຸ່ນ (Form AJ)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ຍີ່ປຸ່ນ ໂດຍນໍາໃຊ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຍີ່ປຸ່ນ (Form AJ) ມີມູນຄ່າ 14,594,938.16 ໂດລາສະຫະລັດ ເມື່ອທຽບໃສ່ປີ 2020 ເຫັນວ່າ ຫຼຸດລົງເລັກໜ້ອຍພຽງ -5.67%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາຕະລາງ 18), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ສິ່ງດັບກິ່ນໃນຫ້ອງຈະມີສານຫອມ (ລະຫັດພາສີ 3307) ມູນຄ່າ 9,621,498.12 ໂດລາສະຫະລັດ, ຮອງລົງມາແມ່ນ ເບຍທີ່ເຮັດຈາກເຂົ້າມອລທ໌ (ລະຫັດພາສີ 2203) ມູນຄ່າ 1,399,033.97 ໂດລາສະຫະລັດ ແລະ ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລະຫັດພາສີ 1211) ມູນຄ່າ 1,338,106.93 ໂດລາສະຫະລັດ. ສິນຄ້າທີ່ມີມູນຄ່າສົ່ງອອກເພີ່ມຂຶ້ນໄດ້ແກ່ ເກີບ, ຕົ້ນໄມ້, ຊຸດສູດສໍາລັບແມ່ຍິງ ຫຼື ເດັກຍິງ, ສິ່ງດັບກິ່ນໃນຫ້ອງຈະມີສານຫອມ ແລະ ອິບເຊີຍ; ເປີເຊັນເພີ່ມຂຶ້ນແມ່ນ 1,140%, 222.16%, 37.57%, 20.40% ແລະ 9.95% ຕາມລໍາດັບ. ສໍາລັບສິນຄ້າທີ່ມີເປີເຊັນຫຼຸດລົງແມ່ນ ເຄື່ອງສໍາເລັດຮູບອື່ນໆ, ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ເບຍທີ່ເຮັດຈາກເຂົ້າມອລທ໌ ແລະ ເສື້ອກັນໜາວແບບເຈີຣ໌ຊີ, ຫຼຸດລົງ -67.41%, -47.69%, -21.46% ແລະ -13.41% ຕາມລໍາດັບ.

ສໍາລັບປະເທດທີ່ສປປ ລາວ ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີ 2021 ມີການສົ່ງອອກໄປທັງໝົດ 03 ປະເທດຄື: ຍີ່ປຸ່ນ, ສິງກະໂປ ແລະ ໄທ ມີມູນຄ່າການສົ່ງອອກ 13,217,135.61 ໂດລາສະຫະລັດ, 812,589.12 ໂດລາສະຫະລັດ ແລະ 565,213.43 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໃນປີ 2021 ກັບ 2020 ເຫັນວ່າ ການສົ່ງອອກປະເທດໄທ ເພີ່ມຂຶ້ນສູງເຖິງ 40.52%, ສ່ວນການສົ່ງອອກໄປປະເທດຍີ່ປຸ່ນ ແມ່ນຫຼຸດລົງ -12.29% ແລະ ການສົ່ງອອກໄປປະເທດສິງກະໂປ ແມ່ນເປັນປະເທດທີ່ມີການສົ່ງອອກໃໝ່ໃນປີນີ້.

**ຕາຕະລາງ 18:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ອາຊຽນ-ຍີ່ປຸ່ນ (Form AJ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 3307 | ສິ່ງປຸງແຕ່ງສໍາລັບກຽມແຖ, ການແຖ ຫຼື ຫຼັງການແຖ, ສິ່ງດັບກິ່ນຮ່າງກາຍ, ສິ່ງປຸງແຕ່ງສໍາລັບການອາບນໍ້າ, ສິ່ງຖອນຂົນ ແລະ ຜະລິດຕະພັນນໍ້າຫອມອື່ນໆ, ເຄື່ອງສໍາອາງປຸງແຕ່ງແລ້ວ ຫຼື ສິ່ງປຸງແຕ່ງດ້ານສຸຂະອະນາໄມ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ; ສິ່ງດັບກິ່ນໃນຫ້ອງ, ຈະມີສານຫອມ ຫຼື ຈະມີຄຸນສົມບັດຂ້າເຊື້ອ ຫຼື ບໍ່ກໍ່ຕາມ. | 7,990,968.96 | 9,621,498.12 | 20.40 |
| 2 | 2203 | ເບຍທີ່ເຮັດຈາກເຂົ້າມອລທ໌. | 1,781,316.66 | 1,399,033.97 | (21.46) |
| 3 | 1211 | ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ຕົ້ນຕໍໃນການເຄື່ອງນໍ້າຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຢາຂ້າເຊື້ອຣາ ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສົດ, ແຊ່ແຂງ ຫຼື ແຫ້ງ,ຈະຕັດ ຫຼື ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກໍ່ຕາມ. | 415,349.48 | 1,338,106.93 | 222.16 |

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 4 | 6115 | ໂສ້ງບາຣ໌, ໂສ້ງບາງຣັດຫຸ່ນ, ຖົງຕີນ ແລະ ຖົງຕີນຖັກແສ່ວອື່ນໆ ລວມທັງຖົງຕີນຫຼຸດຄວາມດັນ (ຕົວຢ່າງ: ບາຣ໌ຊ່ວຍປິ່ນປົວອາການເສັ້ນເລືອດຂອດ) ແລະ ເກີບທີ່ບໍ່ມີພື້ນເສີມ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | - | 613,822.55 | - |
| 5 | 6307 | ເຄື່ອງສຳເລັດຮູບອື່ນໆ, ລວມທັງແມ່ແບບຕັດເຄື່ອງນຸ່ງຫົ່ມ. | 1,853,254.13 | 603,905.55 | (67.41) |
| 6 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 258,811.95 | 224,093.80 | (13.41) |
| 7 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 14,701.22 | 164,626.59 | (47.69) |
| 8 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 10,780.65 | 133,696.41 | 1,140.15 |
| 9 | 0906 | ອົບເຊີຍ ແລະ ດອກຕົ້ນອົບເຊີຍ. | 116,640.00 | 128,250.00 | 9.95 |
| 10 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງ ທີ່ມີອ້ງງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນ້ຳ). | 40,332.40 | 55,485.00 | 37.57 |
| 11 | | ອື່ນໆ | 2,690,028.24 | 312,419.24 | (88.39) |
| | | ລວມ | 15,472,183.69 | 4,594,938.16 | (5.67) |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 19:** ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (Form AJ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ຍີ່ປຸ່ນ | 15,069,955.44 | 13,217,135.61 | (12.29) |
| 2 | ສິງກະໂປ | | 812,589.12 | - |
| 3 | ໄທ | 402,228.25 | 565,213.43 | 40.52 |
| | ລວມ | 15,472,183.69 | 14,594,938.16 | (5.67) |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.10 ສັນຍາການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (Form AANZ)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອົດສະຕາລີ-ນິວຊີແລນ ໂດຍນຳໃຊ້ສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ) ມີມູນຄ່າ 16,133,960.36 ໂດລາສະຫະລັດ ເມື່ອທຽບໃສ່ປີ 2020 ທີ່ຜ່ານມາມີມູນຄ່າ 14,054,385.10 ໂດລາສະຫະລັດ, ຊຶ່ງສິ່ງພົນໃຫ້ເປີເຊັນໃນການສົ່ງອອກພາຍໃຕ້ຂອບສັນຍານີ້ເພີ່ມຂຶ້ນ 14.80%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 (ຕາຕະລາງ 20), ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຫຼອດກ້ອງຖ່າຍໂທລະທັດ (ລະຫັດພາສີ 8540) ມູນຄ່າ 9,997,344.00 ໂດລາສະຫະລັດ, ຮອງລົງມາແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມູນຄ່າ 1,247,656.79 ໂດລາສະຫະລັດ ແລະ ເຄື່ອງເອ້ຍ້ອງ (ລະຫັດພາສີ 7113) ມູນຄ່າ 1,059,001.60 ໂດລາສະຫະລັດ. ລາຍການສິນຄ້າສົ່ງອອກທີ່ມີເປີເຊັນເພີ່ມຂຶ້ນແມ່ນ ເສື້ອຢືດຄໍມົນ ແລະ ເຄື່ອງເອ້ຍ້ອງ; ເປີເຊັນເພີ່ມຂຶ້ນ 137.74% ແລະ 84.95% ຕາມລຳດັບ. ສ່ວນລາຍການສິນຄ້າສົ່ງອອກໃໝ່ຫຼາຍລາຍການເປັນຕົ້ນແມ່ນ ຫຼອດກ້ອງຖ່າຍໂທລະທັດ, ໄມ້ອັດ, ເສື້ອກັນໜາວແບບເຈີຣ໌ຊີ, ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ ແລະ ອື່ນໆອີກຫຼາຍລາຍການ.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີນີ້ແມ່ນມີພຽງ 02 ປະເທດຄື: ອົດສະຕາລີ ມູນຄ່າ 15,871,875.74 ໂດລາສະຫະລັດ ແລະ ນິວຊີແລນ ມູນຄ່າ 262,084.62 ໂດລາສະຫະລັດ ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2021 ກັບ 2020 ເຫັນວ່າ ການສົ່ງອອກໄປທັງສອງປະເທດແມ່ນມີເປີເຊັນເພີ່ມຂຶ້ນຫຼາຍ ອົດສະຕາລີ 13.09% ແລະ ນິວຊີແລນ 1,251.24%.

**ຕາຕະລາງ 20:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 8540 | ຫຼອດເທີມີໂອນິກ, ຫຼອດໂຄນແຄໂທດ ຫຼື ໂຟໂຕແຄໂທດ (ຕົວຢ່າງ, ຫຼອດ ແລະ ທີ່ວາວສູນຍາກາດ ຫຼື ຫຼອດບັນຈຸອາຍ ຫຼື ແກັສ, ຫຼອດ ແລະ ຫຼອດເມີຄິວຣີອາຣ໌ ສຳລັບສິ່ງກະແສໄຟຟ້າກັບ ແລະ ຫຼອດແຄໂທດ-ເຣຍ໌, ຫຼອດກ້ອງຖ່າຍໂທລະທັດ. | - | 9,997,344.00 | - |
| 2 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 1,490,298.35 | 1,247,656.79 | (16.28) |
| 3 | 7113 | ເຄື່ອງເອ້ຍ້ອງ ແລະ ຮູບປະພັນ ແລະ ສ່ວນປະກອບຂອງເຄື່ອງດັ່ງກ່າວ, ທີ່ເຮັດດ້ວຍໂລຫະປະເສີດ ຫຼື ເຮັດດ້ວຍໂລຫະທີ່ຫຸ້ມດ້ວຍໂລຫະປະເສີດ. | 572,599.00 | 1,059,001.60 | 84.95 |
| 4 | 4412 | ໄມ້ອັດ, ໄມ້ອັດວີເນຍ ແລະ ໄມ້ລາມິເນຕິດທີ່ຄ້າຍຄຽງ. | - | 991,385.16 | - |
| 5 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກ | 5,179,749.69 | 454,179.04 | (91.23) |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສິ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| | | ຈາກຊຸດນຸ່ງລອຍນໍ້າ). | | | |
| 6 | 6211 | ຊຸດວອມກິລາ, ຊຸດສໍາລັບຫຼິ້ນສະກີ ແລະ ຊຸດລອຍນໍ້າ; ເຄື່ອງນຸ່ງຫົ່ມອື່ນໆ. | 1,817,437.05 | 443,645.90 | (75.59) |
| 7 | 6505 | ໝວກ ແລະ ເຄື່ອງສຸບຫົວອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊດທ໌ ຫຼື ເຮັດຈາກຜ້າຂອບດອກໄມ້, ສັກກະຫຼາດ ຫຼື ຜະລິດຕະພັນແຜ່ນແພອື່ນໆ ທີ່ເປັນແຜ່ນແພອື່ນໆ ທີ່ເປັນພືນ (ບໍ່ແມ່ນເປັນແຖບ), ຈະຕົບແຕ່ງ ຫຼື ບໍ່ກໍ່ຕາມ, ລວມທັງຕາໜ່າງຄຸມຜົມ, ຈະເຮັດດ້ວຍວັດຖຸໃດກໍ່ຕາມ, ຕົບແຕ່ງ ຫຼື ປະດັບເຄື່ອງປະກອບ ຫຼື ບໍ່ກໍ່ຕາມ. | 1,896,505.72 | 417,746.44 | (77.97) |
| 8 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | - | 396,400.24 | - |
| 9 | 6103 | ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອ ເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງນຸ່ງອາບນໍ້າ), ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | - | 355,456.27 | - |
| 10 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 135,617.97 | 322,411.63 | 137.74 |
| 11 | | ອື່ນໆ | 2,962,177.32 | 448,733.29 | (84.85) |
| | | ລວມ | 14,054,385.10 | 16,133,960.36 | 14.80 |

ແຫຼ່ງຂໍ້ມູນ: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 21:** ປະເທດທີ່ ສປປ ລາວ ສົ່ງອອກຫຼັກ ພາຍໃຕ້ສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສິ່ງອອກ | | |
|---|---|---|---|---|
| | | 2020 | 2021 | ສົມທຽບ% |
| 1 | ອົດສະຕາລີ | 14,034,989.21 | 15,871,875.74 | 13.09 |
| 2 | ນິວຊີແລນ | 19,395.89 | 262,084.62 | 1,251.24 |
| | ລວມ | 14,054,385.10 | 16,133,960.36 | 14.80 |

ແຫຼ່ງຂໍ້ມູນ: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.11 ສັນຍາການຄ້າອາຊີ - ປາຊີຟິກ (Form APTA)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດທີ່ຢູ່ໃນສັນຍາການຄ້າອາຊີປາຊີຟິກໄດ້ແກ່: ອິນເດຍ, ຈີນ, ສ ເກົາຫຼີ, ສີລັງກາ ແລະ ບັງກະລາເດສ ຊຶ່ງການນໍາໃຊ້ ສັນຍາການຄ້າ ອາຊີ-ປາຊີຟິກ (Form APTA)ໃນປີນີ້ມີມູນຄ່າການສົ່ງອອກມີພຽງ 3,000.00 ໂດລາສະຫະລັດ ເມື່ອທຽບໃສ່ປີ 2020 ທີ່ຜ່ານມາມູນຄ່າພຽງ 480.00 ໂດລາສະຫະລັດ ເຫັນວ່າມີເປີເຊັນເພີ່ມຂຶ້ນສູງເຖິງ 525%. ໃນນັ້ນ, ສິນຄ້າທີ່ສົ່ງອອກມີພຽງລາຍການດຽວກໍ່ຄື ນໍ້າໝາກໄມ້ (ລະຫັດພາສີ 2009). ປະເທດທີ່ ສປປ ລາວ ສົ່ງອອກໂດຍນໍາໃຊ້ Form APTA ໃນປີ 2019 ມີພຽງ ສ ເກົາຫຼີ ເທົ່ານັ້ນ.

**ຕາຕະລາງ 22:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າ ອາຊີ-ປາຊີຟິກ (Form APTA)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 2009 | ນໍ້າໝາກໄມ້ (ລວມທັງ ເກຣບ ມັສທ໌) ແລະ ນໍ້າພືດຜັກ, ທີ່ບໍ່ໝັກ ໝັກ ແລະ ບໍ່ທັບຕື່ມເຫຼົ້າ, ຈະມີສ່ວນປະສົມຂອງນໍ້າຕານ ຫຼື ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ. | 480.00 | 3,000.00 | 525% |
| ລວມ | | | 480.00 | 3,000.00 | 525% |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.12 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Form CO-Korea)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆ ທີ່ ສ ເກົາຫຼີ ໃຫ້ສິດທິພິເສດທາງການຄ້າແບບທົ່ວໄປໂດຍການຍົກເວັ້ນພາສີ ແລະ ບໍ່ກໍານົດໂກຕ້າແກ່ສິນຄ້າສົ່ງອອກຈາກປະເທດດ້ອຍພັດທະນາ ລວມທັງ ສປປ ລາວ ໂດຍນໍາໃຊ້ Form CO-Korea ມູນຄ່າການສົ່ງອອກໃນປີນີ້ແມ່ນ 1,146,480.96 ໂດລາສະຫະລັດ ເມື່ອທຽບໃສ່ປີ 2020 ທີ່ມີມູນຄ່າສົ່ງອອກ 1,724,776.71 ໂດລາສະຫະລັດ ເຫັນວ່າຫຼຸດລົງຫຼາຍສູງເຖິງ -33.53%. ໃນນັ້ນລາຍການສິນຄ້າສົ່ງອອກມີພຽງ 06 ລາຍການເທົ່ານັ້ນ (ຕາມຕາຕະລາງ 23), ຊຶ່ງ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຖ່ານໄມ້ (ລະຫັດພາສີ 4402) ມູນຄ່າ 1,053,588.96 ໂດລາສະຫະລັດ, ຮອງລົງມາແມ່ນ ໄມ້ທີ່ເລື່ອຍ ຫຼື ຖາກຕາມລວງຍາວ (ລະຫັດພາສີ 4407) ມູນຄ່າ 57,306.00 ໂດລາສະຫະລັດ ແລະ ແຜ່ນສໍາລັບເຮັດໄມ້ເວີເນຍ (ລະຫັດພາສີ 4408) ມູນຄ່າ 32,185.00 ໂດລາສະຫະລັດ ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2021 ກັບ 2020 ເຫັນວ່າ ມູນຄ່າການສົ່ງອອກແຕ່ລະລາຍການສິນຄ້າໃນຂອບສັນຍານີ້ແມ່ນມີແນວໂນ້ມເພີ່ມຂຶ້ນມີພຽງ 02 ລາຍການຄື: ຖ່ານໄມ້ 33.28% ແລະ ສະບູ 5.10%. ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສ ເກົາຫຼີ ເທົ່ານັ້ນ.

ຕາຕະລາງ 23: ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Form CO-Korea)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 4402 | ຖ່ານໄມ້ (ລວມທັງຖ່ານທີ່ໄດ້ຈາກເປືອກແຂງ ຫຼື ນັດ), ຈະເກາະ ຫຼື ຕິດກັນເປັນກ້ອນ ຫຼື ບໍ່ກໍ່ຕາມ. | 790,506.77 | 1,053,588.96 | 33.28 |
| 2 | 4407 | ໄມ້ທີ່ເລື່ອຍ ຫຼື ຖາກຕາມລວງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼື ເຂົ້າຫຼີ້ມແລ້ວ ຫຼື ບໍ່ກໍ່ຕາມ, ມີຄວາມໜາເກີນ 6 ມີນລີແມັດ. | - | 57,306.00 | - |
| 3 | 4408 | ແຜ່ນສຳລັບເຮັດໄມ້ເວີເນຍ (ລວມທັງແຜ່ນໄມ້ທີ່ຝານເປັນແຜ່ນບາງໆ),ສຳລັບເຮັດໄມ້ອັດ ຫຼື ໄມ້ທີ່ຄ້າຍຄືກັນ ແລະ ໄມ້ອື່ນໆ, ເລື່ອຍຕາມທາງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼື ເຂົ້າຫຼີ້ມແລ້ວ ຫຼື ບໍ່ກໍ່ຕາມ, ມີຄວາມໜາບໍ່ເກີນ 6ມມ. | - | 32,185.00 | - |
| 4 | 4303 | ເຄື່ອງແຕ່ງກາຍ, ສ່ວນປະກອບຂອງເຄື່ອງແຕ່ງກາຍ ແລະ ເຄື່ອງອື່ນໆ ທີ່ເຮັດດ້ວຍໜັງເພີ. | - | 1,800.00 | - |
| 5 | 4401 | ໄມ້ຟືນ, ເປັນທ່ອນ, ດົ້ນ, ກິ່ງ, ມັດ ຫຼື ໃນຮູບລັກສະນະຄ້າຍຄືກັນ, ເສດໄມ້ເປັນຕ່ອນນ້ອຍໆ ຫຼື ເສດໄມ້ມຸ່ນ, ຂີ້ເລື່ອຍ, ເສດໄມ້ ແລະ ສິ່ງແຕກຫັກຂອງໄມ້ຈະເຮັດຕິດລວມກັນເປັນທ່ອນ, ອັດເຂົ້າກັນເປັນທ່ອນ, ອັດເຂົ້າກັນເປັນກ້ອນນ້ອຍ ຫຼື ຮູບຄ້າຍຄຽງອື່ນໆ ຫຼື ບໍ່ກໍ່ຕາມ. | 17,990.40 | 900.00 | (95.00) |
| 6 | 3401 | ສະບູ; ຜະລິດຕະພັນ ແລະ ສິ່ງປຸງແຕ່ງອິນຊີທີ່ມີຄຸນສົມບັດລົດແຮງຕຶງຜິວທີ່ໃຊ້ເປັນສະບູ, ເປັນແທ່ງ, ເປັນຮູບກ້ອນມົນ, ເປັນກ້ອນ ຫຼື ເປັນຮູບອື່ນຈະມີສະບູ ຫຼື ບໍ່ກໍ່ຕາມ; ສິ່ງປຸງແຕ່ງທີ່ມີອິນຊີທີ່ມີຄຸນສົມບັດລົດແຮງຕຶງຜິວທີ່ໃຊ້ສຳລັບການສຳລະລ້າງຜິວເປັນນ້ຳ ຫຼື ເປັນຄຣີມຈັດທຳຂຶ້ນເພື່ອການຂາຍຍ່ອຍຈະມີສະບູ ຫຼື ບໍ່ກໍ່ຕາມ, ກະດາດຍອງ, ສັກກະຫຼາດ ແລະ ຜ້າບໍ່ໄດ້ຕ່ຳ, ອາບຊຶມ, ເຄືອບ, ຫຸ້ມດ້ວຍສະບູ ຫຼື ສານຊັກຟອກ. | 667.00 | 701.00 | 5.10 |
| 9 | | ອື່ນໆ | 915,612.54 | - | (100.00) |
| | | ລວມ | 1,724,776.71 | 1,146,480.96 | (33.53) |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.13 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (Duty Free Tariff Preference: Form DFTP)

ໃນປີ 2021 ການສົ່ງອອກສິນຄ້າປະເພດຕ່າງໆ ທີ່ ອິນເດຍ ໃຫ້ສິດທິພິເສດທາງການຄ້າແບບທົ່ວໄປ ໂດຍການຍົກເວັ້ນພາສີ ແລະ ບໍ່ກຳນົດໂກຕ້າແກ່ສິນຄ້າສົ່ງອອກຈາກປະເທດດ້ອຍພັດທະນາ ລວມທັງ ສປປ ລາວ ໂດຍນຳໃຊ້ Form DFTP ມູນຄ່າການສົ່ງອອກໃນປີນີ້ແມ່ນ 472,369.75 ໂດລາສະຫະລັດ ເມື່ອທຽບໃສ່ປີ 2020 ທີ່ມາມີມູນຄ່າການສົ່ງອອກ 1,933,970.30 ໂດລາສະຫະລັດ ເຫັນວ່າຫຼຸດລົງຫຼາຍ -75,58%. ລາຍການສິນຄ້າສົ່ງອອກໃນປີນີ້ມີພຽງ 03 ລາຍການຄື: ຫຼັກແມ່ນ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 433,440.00 ໂດລາສະຫະລັດ, ຮອງລົງມາແມ່ນ ຂີ້ຄັ່ງ (ລະຫັດພາສີ 1301) ມູນຄ່າ

26,927.75 ໂດລາສະຫະລັດ ແລະ ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລະຫັດພາສີ 1211) ມູນຄ່າ 12,002.00 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2020 ກັບ 2019 ເຫັນວ່າ ມູນຄ່າການສົ່ງອອກແຕ່ລະລາຍການສິນຄ້າໃນຂອບສັນຍາເຫັນວ່າ ມີພຽງ ຂີ້ຄັ່ງ ທີ່ມີເປີເຊັນເພີ່ມຂຶ້ນ 236,60%. ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ອິນເດຍ ເທົ່ານັ້ນ.

**ຕາຕະລາງ 24:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (Duty Free Tariff Preference: DFTP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 4001 | ຢາງທໍາມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກໍາທໍາມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 1,794,844.80 | 433,440.00 | (75.85) |
| 2 | 1301 | ຂີ້ຄັ່ງ; ຢາງໄມ້ທໍາມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົນໂອລີ ໂອເຣຊິນ (ຕົວຢ່າງ, ຢາງຫອມທໍາມະຊາດ). | 8,000.00 | 26,927.75 | 236.60 |
| 3 | 1211 | ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ຕົ້ນຕໍໃນການເຄື່ອງນໍ້າຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຢາຂ້າເຊື້ອຣາ ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສົດ, ແຊ່ແຂງ ຫຼື ແຫ້ງ,ຈະຕັດ ຫຼື ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກໍ່ຕາມ. | 30,253.50 | 12,002.00 | (60.33) |
| 4 | | ອື່ນໆ | 100,872.00 | - | - |
| | | ລວມ | 1,933,970.30 | 472,369.75 | (75.58) |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.14 ສັນຍາການຄ້າເສລີ ອາຊຽນ - ຮົງກົງ, ສປ ຈີນ (Form AHK)

ໃນປີ 2021 ເປັນປີທີ່ສອງທີ່ມີການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ຮົງກົງ, ສປ ຈີນ ໂດຍນໍາໃຊ້ສັນຍາເຂດການຄ້າເສລີ ອາຊຽນ - ຮົງກົງ, ສປ ຈີນ (Form AHK) ມີມູນຄ່າການສົ່ງອອກ 100,186.00 ໂດລາສະຫະລັດ ເມື່ອທຽບໃສ່ມູນຄ່າການສົ່ງອອກໃນປີ 2020 ທີ່ຜ່ານມາມີພຽງ 22,784.53 ໂດລາສະຫະລັດ ເຫັນວ່າ ມີເປີເຊັນເພີ່ມຂຶ້ນ 339.71%. ໃນນັ້ນ, ສິນຄ້າສົ່ງອອກມີພຽງ 02 ລາຍການ ຄື: ເສື້ອຍືດຄໍມົນ (ລະຫັດພາສີ 6109) ມູນຄ່າ 91,470.71 ໂດລາສະຫະລັດ, ໝວກ ແລະ ເຄື່ອງສຸບຫົວອື່ນໆ (ລະຫັດພາສີ 6505) ມູນຄ່າ 8,715.29 ໂດລາສະຫະລັດ ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ຮົງກົງ, ສປ ຈີນ ເທົ່ານັ້ນ.

ຕາຕະລາງ 25: ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາເຂດການຄ້າເສລີ ອາຊຽນ - ຮົງກົງ, ສປ ຈີນ (Form AHK)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | | |
|---|---|---|---|---|---|
| | | | 2020 | 2021 | ສົມທຽບ% |
| 1 | 6109 | ເສື້ອຢືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 12,329.97 | 91,470.71 | 641.86 |
| 2 | 6505 | ໝວກ ແລະ ເຄື່ອງສຸບຫົວອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊດທ໌ ຫຼື ເຮັດຈາກຜ້າຂອບດອກໄມ້, ສັກກະຫຼາດ ຫຼື ຜະລິດຕະພັນແຜ່ນແພອື່ນໆ ທີ່ເປັນແຜ່ນແພອື່ນໆ ທີ່ເປັນຜືນ (ບໍ່ແມ່ນເປັນແຖບ), ຈະຕົບແຕ່ງ ຫຼື ບໍ່ກໍ່ຕາມ, ລວມທັງຕາໜ່າງຄຸມຜົມ, ຈະເຮັດດ້ວຍວັດຖຸໃດກໍ່ຕາມ, ຕົບແຕ່ງ ຫຼື ປະດັບເຄື່ອງປະກອບ ຫຼື ບໍ່ກໍ່ຕາມ. | - | 8,715.29 | - |
| 3 | ອື່ນໆ | | 22,784.53 | - | (100.00) |
| ລວມ | | | 22,784.53 | 100,186.00 | 339.71 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.15 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ (GSP 97% ຫຼື Form CO-China)

ໃນປີ 2021 ເປັນປີທີ່ເລີ່ມຈັດຕັ້ງປະຕິບັດສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ (Certificate of Origin Special Preference Treatment) ເປັນການຍົກເວັ້ນອັດຕາພາສີຂາເຂົ້າຈຳນວນ 97% ຂອງ ສປ ຈີນ ໃຫ້ແກ່ບັນດາປະເທດທີ່ດ້ອຍພັດທະນາ ໂດຍການຈັດຕັ້ງປະຕິບັດສິດທິພິເສດໃນຂອບນີ້ແມ່ນ ນັບຕັ້ງແຕ່ວັນທີ 01 ມັງກອນ 2021 ເປັນຕົ້ນມາ ມູນຄ່າການສົ່ງອອກຂອງຂອບນີ້ ແມ່ນມີມູນຄ່າ 467,685,421.68 ໂດລາສະຫະລັດ ເປັນຂອບສັນຍາທີ່ມີການນຳໃຊ້ຫຼາຍເປັນອັນດັບທີ 03 ຮອງຈາກ Form E ແລະ D, ຊຶ່ງສິນຄ້າທີ່ສົ່ງອອກໄປມີພຽງ ເຈ້ຍ ແລະ ເຈ້ຍແຂງອື່ນໆທີ່ບໍ່ໄດ້ເຄືອບ, ເປັນມ້ວນ ຫຼື ເປັນແຜ່ນ (ລະຫັດພາສີ 4805) ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສປ ຈີນ ເທົ່ານັ້ນ.

## 3. ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

### 3.1 ປະເທດນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2021 ທີ່ຜ່ານມາມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ ຈາກທັງໝົດ 33 ປະເທດ ແລະ ໄຕ້ຫວັນ, ສປ ຈີນ, ຊຶ່ງມີມູນຄ່າການນຳເຂົ້າສູງເຖິງ 761,182,525.69 ໂດລາສະຫະລັດ ເມື່ອສົມທຽບໃສ່ມູນຄ່າການນຳເຂົ້າໃນປີ 2020 ທີ່ຜ່ານມາມີພຽງ 605,448,823.42 ໂດລາສະຫະລັດ ເພີ່ມຂຶ້ນ 25.72%. ປະເທດທີ່ມີການນຳເຂົ້າເປັນອັນດັບຕົ້ນໆຂອງປີນີ້ແມ່ນ ໄທ, ຈີນ, ຍີ່ປຸ່ນ ແລະ ສສ ຫວຽດນາມ; ມີມູນຄ່ານຳເຂົ້າ 400,316,110.32 ໂດລາສະຫະລັດ, 199,542,941.68 ໂດລາສະຫະລັດ, 58,148,797.01 ໂດລາສະຫະລັດ ແລະ 51,413,453.37 ໂດລາສະຫະລັດ ຕາມລຳດັບ, ຊຶ່ງປະເທດທີ່ມີການນຳເຂົ້າຕົ້ນຕໍແມ່ນມີເປີເຊັນເພີ່ມຂຶ້ນທັງໝົດ ຍີ່ປຸ່ນ 100.38%, ສປ ຈີນ 25.23%, ໄທ 21.91% ແລະ ສສ ຫວຽດນາມ 6.15%. ສຳລັບປະເທດທີ່ມີການສົ່ງອອກໃໝ່ໃນປີ 2021 ແມ່ນ ການາດາ, ອາກຊັງຕິນ, ພະມ້າ, ໂຮນລັງ, ລັດເຊຍ, ປ໋ອກຕ຺ຸຍການ ແລະ ອັງກລັງ. ປະເທດທີ່ມີເປີເຊັນການນຳເຂົ້າຫຼຸດລົງແມ່ນ ອິນໂດເນ

ເຊຍ, ອາຟຣິກກາໃຕ້, ຣິງກາລີ, ເຢຍລະມັນ, ອີຕາລີ ແລະ ແອັສປາຍ; ເປີເຊັນຫຼຸດລົງແມ່ນ -35.52%, -31.24%, -18.40%, -17.27%, -15.22% ແລະ -8.77% ຕາມລຳດັບ.

ໃນປີ 2020 ສປປ ລາວ ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 27 ປະເທດ ຊຶ່ງມີມູນຄ່າການນຳເຂົ້າທັງໝົດ 605,446,803.42 ໂດລາສະຫະລັດ. ໃນນັ້ນ, ປະເທດທີ່ມີມູນຄ່າການນຳເຂົ້າສູງກວ່າໝູ່ແມ່ນ ໄທ, ສປ ຈີນ ແລະ ສສ ຫວຽດນາມ ມີມູນຄ່າການນຳເຂົ້າສູງເຖິງ 328,371,421.63 ໂດລາສະຫະລັດ, 159,342,443.93 ໂດລາສະຫະລັດ ແລະ 48,433,706.05 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ຊີລີ, ແບນຊິກ ແລະ ນິວຊີແລນ, ຊຶ່ງມີມູນຄ່າການນຳເຂົ້າ 64,496.00 ໂດລາສະຫະລັດ, 51,972.00 ໂດລາສະຫະລັດ ແລະ 32,214.28 ໂດລາສະຫະລັດ ຕາມລຳດັບ.

ຂໍ້ມູນສິດທິພິເສດທາງການຄ້າເບື້ອງຂາເຂົ້າ (ການນຳເຂົ້າ) ທີ່ນຳເອົາມາທຳການວິເຄາະໃນຄັ້ງນີ້ມີ 03 ຮູບແບບດ້ວຍກັນ ຄື: ຂໍ້ມູນສິດທິພິເສດທາງການຄ້າແບບທົ່ວໄປ, ແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ສິດທິພິເສດທາງການຄ້າໃນຂອບອົງການການຄ້າໂລກ (WTO).

**ຕາຕະລາງ 26:** ປະເທດທີ່ ສປປ ລາວ ນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ ປະຈຳປີ 2020 ຫາ 2021

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | 2020 | 2021 | ສົມທຽບ (%) |
|---|---|---|---|---|
| 1 | ໄທ | 328,371,421.63 | 400,316,110.32 | 21.91 |
| 2 | ຈີນ | 159,342,443.93 | 199,542,941.68 | 25.23 |
| 3 | ຍີ່ປຸ່ນ | 29,019,347.08 | 58,148,797.01 | 100.38 |
| 4 | ຫວຽດນາມ | 48,433,706.05 | 51,413,453.37 | 6.15 |
| 5 | ສ ອາເມລິກາ | 6,590,455.83 | 8,563,509.31 | 29.94 |
| 6 | ອິນເດຍ | 3,723,727.45 | 8,085,351.99 | 117.13 |
| 7 | ອັງກິດ | 4,180,969.19 | 5,474,403.59 | 30.94 |
| 8 | ສິງກະໂປ | 723,254.93 | 5,245,729.30 | 625.29 |
| 9 | ອິນໂດເນເຊຍ | 7,638,799.05 | 4,925,576.09 | (35.52) |
| 10 | ອົດສະຕາລີ | 505,124.38 | 4,906,215.09 | 871.29 |
| 11 | ສ ເກົາຫຼີ | 2,144,431.54 | 3,555,536.25 | 65.80 |
| 12 | ມາເລເຊຍ | 2,615,027.31 | 3,473,457.44 | 32.83 |
| 13 | ສະໂລວາເກຍ | 484,269.00 | 2,421,485.67 | 400.03 |
| 14 | ໂອຕຣິສ | 318,992.00 | 1,405,999.39 | 340.76 |
| 15 | ເຢຍລະມັນ | 1,381,473.00 | 1,142,835.23 | (17.27) |
| 16 | ຝຣັ່ງ | 367,573.56 | 443,102.22 | 20.55 |
| 17 | ແອັສປາຍ | 324,732.58 | 296,266.84 | (8.77) |
| 18 | ຟີລິບປິນ | 219,749.53 | 275,327.96 | 25.29 |
| 19 | ການາດາ | - | 225,780.00 | - |
| 20 | ແມັກຊິໂກ | 144,029.00 | 221,569.00 | 53.84 |
| 21 | ອີຕາລີ | 256,990.90 | 217,881.25 | (15.22) |
| 22 | ຣິງກາລີ | 263,618.00 | 215,100.00 | (18.40) |
| 23 | ຊີລີ | 64,496.00 | 176,928.00 | 174.32 |
| 24 | ອາກຊັງຕິນ | - | 136,845.55 | - |

| ລ/ດ | ຊື່ປະເທດ | 2020 | 2021 | ສົມທຽບ (%) |
|---|---|---|---|---|
| 25 | ພະມ້າ | - | 75,639.74 | - |
| 26 | ອາຟຣິກາໃຕ້ | 107,580.20 | 73,974.37 | (31.24) |
| 27 | ແບນຊິກ | 51,972.00 | 64,003.77 | 23.15 |
| 28 | ນິວຊີແລນ | 32,214.28 | 56,731.44 | 76.11 |
| 29 | ໂຮນລັງ | - | 31,987.02 | - |
| 30 | ລັດເຊຍ | - | 24,766.74 | - |
| 31 | ປອກຕຸຍການ | - | 22,899.06 | - |
| 32 | ຮຽກລັງ | - | 300.00 | - |
| 33 | ສະຫະນະຄອນ ອາເມຣິດ | 7,891,327.00 | - | (100.00) |
| 34 | ໄຕ້ຫວັນ | 249,078.00 | - | (100.00) |
| | ລວມ | 605,448,823.42 | 761,182,525.69 | 25.72 |

ແຫຼ່ງຂໍ້ມູນ: ກົມພາສີ, ກະຊວງການເງິນ

## 3.2 ລາຍການສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2021 ການນຳເຂົ້າສິນຄ້າຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າ ໄດ້ຈັດລາຍການສິນຄ້ານຳເຂົ້າເປັນກຸ່ມສິນຄ້າ ທັງໝົດມີຈຳນວນ 13 ກຸ່ມ ຄື: ກຸ່ມສະບຽງອາຫານ, ກຸ່ມສິນຄ້າຟຸມເຟືອຍ, ກຸ່ມສິນຄ້າຮັບໃຊ້ອຸດສາຫະກຳ, ກຸ່ມນ້ຳມັນເຊື້ອໄຟ ແລະ ອາຍແກັດ, ກຸ່ມຜະລິດຕະພັນ ແລະ ສິນຄ້າຮັບໃຊ້ກະສິກຳ, ກຸ່ມພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່, ກຸ່ມວັດຖຸດິບນຳເຂົ້າສຳລັບຕັດຫຍິບ, ກຸ່ມອຸປະກອນ ແລະ ການຢາໃຊ້ໃນການແພດ, ກຸ່ມອຸປະກອນ ແລະ ເຄື່ອງໃຊ້ໄຟຟ້າ, ກຸ່ມອຸປະກອນເຄື່ອງກໍ່ສ້າງ, ກຸ່ມເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍປະຈຳວັນ, ກຸ່ມເຄື່ອງອຸປະກອນເອເລັກໂຕຣນິກ ແລະ ສື່ສານ ແລະ ກຸ່ມເຄື່ອງໃຊ້ຫ້ອງການ.

ສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າໃນໄລຍະປີ 2021 ທີ່ຜ່ານມາເຫັນວ່າ ມີລາຍການສິນຄ້ານຳເຂົ້າທັງໝົດຈຳນວນ 660 ລາຍການ ທີ່ມີມູນຄ່າ 761,180,504.69 ໂດລາສະຫະລັດ. ສຳລັບປີ 2020 ມີການນຳເຂົ້າສິນຄ້າຈຳນວນ 586 ລາຍການ ຊຶ່ງມີມູນຄ່າການນຳເຂົ້າ 665,920,272.34 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກຂອງປີນີ້ໃສ່ປີ 2020 ທີ່ຜ່ານມາເຫັນວ່າ ລາຍການສິນຄ້ານຳເຂົ້າເພີ່ມຂຶ້ນ 74 ລາຍການ ແລະ ເປີເຊັນການນຳເຂົ້າເພີ່ມຂຶ້ນ 25.72%. ສຳລັບກຸ່ມສິນຄ້າທີ່ມີການນຳເຂົ້າຫຼາຍກວ່າໝູ່ 03 ອັນດັບຕົ້ນໃນປີນີ້ແມ່ນ ກຸ່ມສິນຄ້າພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່, ກຸ່ມອຸປະກອນເຄື່ອງກໍ່ສ້າງ ແລະ ກຸ່ມຜະລິດຕະພັນ ແລະ ສິນຄ້າຮັບໃຊ້ກະສິກຳ; ມີມູນຄ່າການນຳເຂົ້າ 339,698,701.97 ໂດລາສະຫະລັດ, 92,475,780.70 ໂດລາສະຫະລັດ ແລະ 84,773,092.86 ໂດລາສະຫະລັດ ຕາມລຳດັບ. ສຳລັບກຸ່ມທີ່ມີເປີເຊັນການນຳເຂົ້າຫຼາຍແມ່ນ ກຸ່ມວັດຖຸດິບນຳເຂົ້າສຳລັບຕັດຫຍິບ, ກຸ່ມສິນຄ້າຮັບໃຊ້ອຸດສາຫະກຳ, ກຸ່ມຜະລິດຕະພັນ ແລະ ສິນຄ້າຮັບໃຊ້ກະສິກຳ ແລະ ກຸ່ມເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍປະຈຳວັນ; ເປີເຊັນການເພີ່ມຂຶ້ນແມ່ນ: 304%, 77.17%, 67.19% ແລະ 39.45% ຕາມລຳດັບ. ສ່ວນກຸ່ມສິນຄ້າທີ່ມີເປີເຊັນການນຳເຂົ້າຫຼຸດລົງແມ່ນ ກຸ່ມນ້ຳມັນເຊື້ອໄຟ ແລະ ອາຍແກັດ, ກຸ່ມສິນຄ້າຟຸມເຟືອຍ ແລະ ກຸ່ມເຄື່ອງໃຊ້ຫ້ອງການ; ເປີເຊັນຫຼຸດລົງແມ່ນ -28.89%, -5.84% ແລະ -3.96% ຕາມລຳດັບ.

ສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າໃນປີ 2020 ທີ່ຜ່ານມາເຫັນວ່າ ມີລາຍການສິນຄ້ານຳເຂົ້າທັງໝົດຈຳນວນ 586 ລາຍການ ທີ່ມີມູນຄ່າ 605,446,803.42 ໂດລາສະຫະລັດ. ສຳລັບກຸ່ມສິນຄ້າທີ່ມີການນຳເຂົ້າຫຼາຍກວ່າໝູ່ 03 ອັນດັບຕົ້ນໃນປີ 2020 ແມ່ນ ກຸ່ມສິນຄ້າພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່, ກຸ່ມອຸປະກອນເຄື່ອງກໍ່ສ້າງ ແລະ ກຸ່ມສະບຽງອາຫານ; ມີມູນຄ່າການນຳເຂົ້າ 226,136,688.54 ໂດລາ

ສະຫະລັດ, 80,699,394.28 ໂດລາສະຫະລັດ ແລະ 77,505,757.12 ໂດລາສະຫະລັດ ຕາມລຳດັບ. ກຸ່ມສິນຄ້ານຳເຂົ້າເພີ່ມຂຶ້ນແມ່ນ ກຸ່ມຜະລິດຕະພັນ ແລະ ເຄື່ອງຮັບໃຊ້ກະສິກຳ, ອຸປະກອນ ແລະ ເຄື່ອງໃຊ້ໄຟຟ້າ, ວັດຖຸດິບນຳເຂົ້າສຳລັບຕັດຫຍິບ, ເຄື່ອງໃຊ້ຫ້ອງການ, ສະບຽງອາຫານ, ອຸປະກອນ ແລະ ຢາໃຊ້ໃນການແພດ ແລະ ອຸປະກອນເຄື່ອງກໍ່ສ້າງ; ເປີເຊັນເພີ່ມຂຶ້ນແມ່ນ 177.89%, 127.15%, 94.17%, 68.19% 43.06%, 9.89% ແລະ 6.67% ຕາມລຳດັບ. ກຸ່ມສິນຄ້າທີ່ມີເປີເຊັນການນຳເຂົ້າຫຼຸດລົງແມ່ນ: ກຸ່ມສິນຄ້າຟຸມເຟືອຍ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍປະຈຳວັນ, ພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່, ກຸ່ມນໍ້າມັນເຊື້ອໄຟ ແລະ ອາຍແກັດ, ເຄື່ອງອຸປະກອນເອເລັກໂຕຣນິກ ແລະ ສື່ສານ ແລະ ສິນຄ້າຮັບໃຊ້ອຸດສາຫະກຳ; ເປີເຊັນຫຼຸດລົງແມ່ນ -40.30%, -37.41%, -26.99%, -11.51%, -5.75% ແລະ -0.01% ຕາມລຳດັບ.